ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 059 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28-01-2014

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການດຳເນີນຄະດີເດັກ

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ, ສະບັບເລກທີ 019 /ສພຊ, ລົງວັນທີ 20 ທັນວາ 2013;
- ອີງຕາມສີໜັງສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 09 /ຄປຈ, ລົງວັນທີ 23/01/2014.

### ປະທານປະເທດ

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍການດຳເນີນຄະດີເດັກ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 019 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການດຳເນີນຄະດີເດັກ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການດຳເນີນຄະດີເດັກ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 20 ທັນວາ 2013

**ກອງປະຊຸມໄດ້ຕົກລົງ:**

**<u>ມາດຕາ 1</u>** ຮັບຮອງເອົາກົດໝາຍວ່າດ້ວຍ ການດຳເນີນຄະດີເດັກ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

**<u>ມາດຕາ 2</u>.** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2013**

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ສະພາແຫ່ງຊາດ

ເລກທີ 41 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2013

# ກົດໝາຍ
# ວ່າດ້ວຍ ການດຳເນີນຄະດີເດັກ
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການດຳເນີນຄະດີເດັກທາງດ້ານບໍລິຫານ ແລະ ຕາມຂະບວນການຍຸຕິທຳ ໃຫ້ຖືກຕ້ອງ, ຍຸຕິທຳ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແນໃສ່ສຶກສາອົບຮົມ, ຊ່ວຍເຫຼືອເດັກໃຫ້ເຄົາລົບ ແລະ ປະຕິບັດກົດໝາຍ, ຈຳກັດ, ສະກັດກັ້ນການກະທຳຜິດຂອງເດັກ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສ້າງເງື່ອນໄຂໃຫ້ເດັກ ໄດ້ຮັບການຟື້ນຟູ, ປິ່ນປົວທາງດ້ານຈິດໃຈ ສາມາດປັບຕົວເຂົ້າສູ່ສັງຄົມ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການດຳເນີນຄະດີເດັກ**

ຄະດີເດັກ ແມ່ນ ຄະດີກ່ຽວກັບການກະທຳ ຫຼື ການເມີນເສີຍຂອງເດັກ ທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ຫຼື ສັງຄົມ ຂອງ ສປປ ລາວ, ຕໍ່ກຳມະສິດຂອງ ລັດ, ລວມໝູ່ ແລະ ບຸກຄົນ, ຊີວິດ, ສຸຂະພາບ, ກຽດສັກສີ, ສິດ, ເສລີພາບ ຂອງພົນລະເມືອງ, ຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງບົ່ງໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນຂອງ ສປປ ລາວ ທີ່ໄດ້ກຳນົດໂທດທາງອາຍາ ແລະ ບັນຫາທາງແພ່ງທີ່ພົວພັນກັບເດັກ.

ການດຳເນີນຄະດີເດັກ ແມ່ນ ການເຄື່ອນໄຫວຂອງ ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ, ຫ້ອງການຍຸຕິທຳ ເມືອງ, ເທດສະບານ, ໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການ

ເດັກ, ສານເດັກ, ຄະນະສານເດັກ ແລະ ຜູ້ເຂົ້າຮ່ວມອື່ນ ເພື່ອສຶກສາອົບຮົມ, ຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ນຳເອົາເດັກກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ຍຸຕິທຳ ລວມເຖິງການເຄື່ອນໄຫວແກ້ໄຂຄະດີເດັກທາງດ້ານບໍລິຫານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ເດັກ ໝາຍເຖິງ** ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດ ປີ;
2. **ເດັກກໍ່ຄວາມເສັຍຫາຍ** ໝາຍເຖິງ ເດັກໄດ້ກະທຳສິ່ງໃດສິ່ງໜຶ່ງທີ່ເຮັດໃຫ້ ບຸກຄົນອື່ນໄດ້ຮັບຄວາມເສັຍຫາຍ;
3. **ເດັກທີ່ມີຄວາມຮັບຜິດຊອບໂທດທາງອາຍາ ໝາຍເຖິງ** ເດັກທີ່ມີອາຍຸ ສິບຫ້າ ປີ ແຕ່ ບໍ່ເຖິງ ສິບແປດ ປີ ໃນເວລາກະທຳຜິດ;
4. **ເດັກເປັນພະຍານ ໝາຍເຖິງ** ເດັກທີ່ຮູ້ເຫັນເຫດການ ຊຶ່ງອົງການທີ່ກ່ຽວຂ້ອງ ຮຽກມາໃຫ້ການ ເພື່ອເປັນຂໍ້ມູນໃນການດຳເນີນຄະດີ;
5. **ເດັກຖືກເຄາະຮ້າຍ ໝາຍເຖິງ** ເດັກທີ່ໄດ້ຮັບຄວາມເສຍຫາຍໂດຍກົງ ຕໍ່ຊີວິດ, ສຸຂະພາບ, ຈິດໃຈ, ກຽດສັກສີ, ສິດເສລີພາບ ຫຼື ຊັບສິນ ຈາກການກະທຳຂອງ ບຸກຄົນອື່ນ;
6. **ສານ** ໝາຍເຖິງ ສານເດັກ ແລະ ຄະນະສານເດັກ;
7. **ສານເດັກ** ໝາຍເຖິງ ສານສະເພາະ ທີ່ສ້າງຕັ້ງຂຶ້ນຢູ່ ແຂວງ, ນະຄອນ ຕາມກົດໝາຍວ່າດ້ວຍ ສານປະຊາຊົນ ທີ່ພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ ກ່ຽວກັບເດັກກະທຳຜິດ ແລະ ການພິຈາລະນາບັນຫາທາງແພ່ງກ່ຽວກັບເດັກ;
8. **ຄະນະສານເດັກ** ໝາຍເຖິງ ຄະນະສານໜຶ່ງ ທີ່ສ້າງຕັ້ງຂຶ້ນຢູ່ ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ ເພື່ອພິຈາລະນາຄະດີ ກ່ຽວກັບເດັກ ເປັນຂັ້ນອຸທອນ ແລະ ຂັ້ນລົບລ້າງ;
9. **ຄຳຕົກລົງຂອງສານ** ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;
10. **ຜູ້ປົກປ້ອງ** ໝາຍເຖິງ ບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີເດັກ ເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ ເຊັ່ນ ຜູ້ຕາງໜ້າຂອງອົງການຈັດຕັ້ງ, ວິສາຫະກິດ, ພໍ່ແມ່, ຜູ້ປົກຄອງ ຫຼື ຍາດພີ່ນ້ອງໃກ້ຊິດ, ທະນາຍຄວາມ, ຄູ, ອາຈານ;
11. **ຜູ້ປົກປ້ອງອື່ນ** ໝາຍເຖິງ ຜູ້ທີ່ຕ້ອງໄດ້ຮັບ ການແຕ່ງຕັ້ງ ຫຼື ມອບສິດ ໃຫ້ເຂົ້າຮ່ວມໃນການດຳເນີນຄະດີເດັກ ເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງເດັກ;
12. **ໜ່ວຍງານສືບສວນ-ສອບສວນຄະດີເດັກ** ໝາຍເຖິງ ໜ່ວຍງານຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ ເພື່ອເຮັດໜ້າທີ່ສະເພາະດຳເນີນຄະດີເດັກ;

13. **ໜ່ວຍງານໄອຍະການເດັກ** ໝາຍເຖິງ ໜ່ວຍງານຂອງອົງການໄອຍະການປະຊາຊົນ ເພື່ອເຮັດໜ້າທີ່ສະເພາະດຳເນີນຄະດີເດັກ;

14. **ການສືບສວນ-ສອບຖາມ** ໝາຍເຖິງ ການຊອກຫາຂໍ້ມູນ, ການເກັບກຳຫຼັກຖານ ແລະ ການເອົາຄຳໃຫ້ການຂອງເດັກກະທຳຜິດ;

15. **ການສຳພາດ** ໝາຍເຖິງ ການເກັບກຳຂໍ້ມູນຫຼັກຖານ ຫຼື ການເອົາຄຳໃຫ້ການຂອງ ເດັກ ຖືກເຄາະຮ້າຍ, ເດັກເປັນພະຍານ ແລະ ເດັກພິການ;

16. **ການກະທຳຜິດເປັນອາຈີນ** ໝາຍເຖິງ ການກະທຳຜິດ ໃນສະຖານໃດໜຶ່ງ ແຕ່ ສີ່ຄັ້ງ ຂຶ້ນໄປ;

17. **ຜູ້ເຂົ້າຮ່ວມໃນການດຳເນີນຄະດີ** ໝາຍເຖິງ ຜູ້ມີສ່ວນກ່ຽວຂ້ອງກັບຄະດີ ແລະ ຜູ້ຖືກ ແຕ່ງຕັ້ງ, ຮຽກ ຫຼື ເຊີນໃຫ້ມາເຂົ້າຮ່ວມໃນການດຳເນີນຄະດີເດັກ;

18. **ຜູ້ຊ່ຽວຊານ** ໝາຍເຖິງ ບຸກຄົນທີ່ມີຄວາມຮູ້ ແລະ ປະສົບການທາງດ້ານວິຊາສະ ເພາະໃດໜຶ່ງ ທີ່ຖືກຮັບຮູ້ຈາກສະຖາບັນທີ່ກ່ຽວຂ້ອງ ຊຶ່ງສາມາດໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫາທີ່ພົວ ພັນກັບວິຊາສະເພາະຂອງຕົນ;

19. **ຜູ້ຊຳນານງານ** ໝາຍເຖິງ ຜູ້ມີຄວາມຮູ້, ຄວາມສາມາດໃນດ້ານໃດໜຶ່ງ ເພື່ອໃຫ້ຄຳ ເຫັນ ກ່ຽວກັບບັນຫາທີ່ອົງການດຳເນີນຄະດີເດັກ ໃຫ້ທຳການພິສູດ;

20. **ສິດທິເດັກ** ໝາຍເຖິງ ຄວາມຈຳເປັນ, ຄວາມຕ້ອງການ ແລະ ສິດຂອງເດັກ ຊຶ່ງ ລັດ ແລະ ສັງຄົມ ຕ້ອງເອົາໃຈໃສ່;

21. **ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ** ໝາຍເຖິງ ທີມໜ່ວຍການຈັດຕັ້ງຍຸຕິທຳຂັ້ນຮາກ ຖານ ທີ່ເຮັດໜ້າທີ່ປະນີປະນອມ ຂໍ້ຂັດແຍ່ງຕ່າງໆທີ່ພົວພັນກັບເດັກ ແລະ ແກ້ໄຂຄະດີເດັກທີ່ບໍ່ຮ້າຍ ແຮງ ຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າ ສາມປີ;

22. **ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ** ໝາຍເຖິງ ການຈັດຕັ້ງທີ່ໄດ້ຮັບ ການສ້າງຕັ້ງຂຶ້ນຢູ່ ສູນກາງ, ແຂວງ, ນະຄອນ ແລະ ເມືອງ, ເທດສະບານ ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານປົກປ້ອງ ແລະ ຊ່ວຍເຫຼືອເດັກ;

23. **ຕາໜ່າງປົກປ້ອງ ແລະ ຊ່ວຍເຫຼືອເດັກ** ໝາຍເຖິງ ຜູ້ທີ່ໄດ້ຮັບການແຕ່ງຕັ້ງໃຫ້ເປັນ ເຄືອຂ່າຍຂອງຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກປະຈຳຢູ່ຂັ້ນ ບ້ານ ແລະ ຊຸມຊົນ;

24. **ນັກສັງຄົມສົງເຄາະ** ໝາຍເຖິງ ຜູ້ໄດ້ຮັບການແຕ່ງຕັ້ງ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ຂອງລັດ ເພື່ອໃຫ້ການຊ່ວຍເຫຼືອເດັກກະທຳຜິດ, ເດັກເປັນພະຍານ ແລະ ເດັກຖືກເຄາະຮ້າຍ;

25. **ນັກຈິດຕະວິທະຍາ** ໝາຍເຖິງ ນັກວິຊາການ ທີ່ມີຄວາມຮູ້ກ່ຽວກັບສຸຂະພາບຈິດ;

26. **ດູນພິນິດ** ໝາຍເຖິງ ຄວາມໝັ້ນໃຈຂອງຜູ້ດຳເນີນຄະດີ ກ່ຽວກັບການຕີລາຄາຂໍ້ມູນ, ຫຼັກຖານໃນຄະດີເດັກ;

27. **ຄຳຖາມແບບກົດດັນ** ໝາຍເຖິງ ການຕັ້ງຄຳຖາມທີ່ມີລັກສະນະບັງຄັບ, ນາບຂູ່ ຊຶ່ງເປັນການແຕະຕ້ອງເຖິງກຽດສັກສີ ແລະ ຈິດໃຈຂອງເດັກເພື່ອໃຫ້ເດັກຍອມຮັບ;

28. **ຄຳຖາມແບບຊີ້ນຳ ຫຼື ຄຳຖາມປິດ** ໝາຍເຖິງ ການຕັ້ງຄຳຖາມທີ່ມີລັກສະນະເລົ່າເລື່ອງໄປກ່ອນ ຈຶ່ງຖາມເດັກວ່າ ແມ່ນ ຫຼື ບໍ່ແມ່ນ, ຮັບຮູ້ ຫຼື ບໍ່ຮັບຮູ້, ເຫັນ ຫຼື ບໍ່ເຫັນ;

29. **ຄຳຖາມແບບຊັກຈູງ** ໝາຍເຖິງ ການຕັ້ງຄຳຖາມທີ່ມີລັກສະນະ ຍົວະເຍົ້າ, ຈອບອອຍ ເພື່ອໃຫ້ເດັກມີທ່າອ່ຽງ ແລະ ໃຫ້ການໄປຕາມຈຸດປະສົງຂອງຜູ້ຖາມ;

30. **ການເມີນເສີຍ** ໝາຍເຖິງ ການບໍ່ກະທຳໃດໆ ເຊັ່ນ ການບໍ່ໃຫ້ຄວາມຊ່ວຍເຫຼືອບຸກຄົນອື່ນ ໃນເວລາຕົກຢູ່ໃນໄພອັນຕະລາຍ ທັງໆທີ່ຜູ້ກ່ຽວມີຄວາມສາມາດຊ່ວຍເຫຼືອໄດ້;

31. **ບຸກຄົນທີສາມ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຂົ້າຮ່ວມໃນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ທີ່ຕິດພັນກັບຄະດີ ຊຶ່ງພວມຖືກພິຈາລະນາ;

32. **ລະຫຸໂທດ** ໝາຍເຖິງ ການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕຳນິວິຈານຕໍ່ໜ້າມະຫາຊົນ ຫຼື ໂທດປັບໃໝ;

33. **ໂທສານຸໂທດ** ໝາຍເຖິງ ການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສິບປີ ພ້ອມທັງໂທດປັບໃໝ;

34. **ຄະຣຸໂທດ** ໝາຍເຖິງ ການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບ ແຕ່ ຫ້າປີຂຶ້ນໄປ ຫາ ຕະຫຼອດຊີວິດ ພ້ອມທັງໂທດປັບໃໝ ແລະ ໂທດປະຫານຊີວິດ;

35. **ການກະທຳຜິດບໍ່ຮ້າຍແຮງ** ໝາຍເຖິງ ການກະທຳຜິດທີ່ບໍ່ມີຄວາມເສັຍຫາຍຫຼວງຫຼາຍ ຫຼື ບໍ່ມີຄວາມສ່ຽງຕໍ່ຊີວິດ ສຸຂະພາບຂອງບຸກຄົນໃດໜຶ່ງ;

36. **ຜູ້ປົກຄອງເດັກ** ໝາຍເຖິງ ຜູ້ທີ່ມີຄວາມຮັບຜິດຊອບຕໍ່ເດັກ ຄືກັນກັບພໍ່ແມ່ຂອງເດັກ;

37. **ຮອບດ້ານ** ໝາຍເຖິງ ການດຳເນີນຄະດີ ຕ້ອງຊອກຫາຫຼັກຖານ ທັງຜູກມັດ ແລະ ແກ້ມັດ;

38. **ຄົບຖ້ວນ** ໝາຍເຖິງ ການດຳເນີນຄະດີ ນອກຈາກມີ ສີ່ ອົງປະກອບຂອງການກະທຳຜິດ ແລ້ວ ຍັງຕ້ອງຊອກຫາສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາຕື່ມອີກ;

39. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານດຳເນີນຄະດີເດັກ

ລັດ ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານດຳເນີນຄະດີເດັກ ດ້ວຍການວາງນະໂຍບາຍ, ກົດໝາຍ, ລະບຽບການ, ການສະໜອງງົບປະມານ, ການປະກອບບຸກຄະລາກອນ, ພາຫະນະ, ອຸປະກອນ, ເຕັກນິກ ແລະ ການກໍ່ສ້າງພື້ນຖານໂຄງລ່າງ ເຊັ່ນ ສ້າງຕັ້ງສູນຝຶກອົບຮົມສຳລັບເດັກກະທຳຜິດ ຕາມຄວາມເໝາະສົມ ໂດຍການມີສ່ວນຮ່ວມຊ່ວຍເຫຼືອຂອງ ບຸກຄົນ, ນິຕິບຸກ

ຄົມ ແລະ ການຈັດຕັ້ງ ເພື່ອເຮັດໃຫ້ການດຳເນີນຄະດີເດັກມີຄວາມ ວ່ອງໄວ, ໂປ່ງໃສ, ຖືກຕ້ອງຕາມກົດໝາຍ, ຮັບປະກັນຄວາມຍຸຕິທຳ, ຈຳກັດ ແລະ ສະກັດກັ້ນການກະທຳຜິດຂອງເດັກ.

ລັດ ເອົາໃຈໃສ່ ສົ່ງເສີມການໂຄສະນາ ເຜີຍແຜ່ກົດໝາຍ ໃຫ້ພົນລະເມືອງ ຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ປົກປ້ອງ ແລະ ຊ່ວຍເຫຼືອ ເດັກກະທຳຜິດ, ເດັກຖືກເຄາະຮ້າຍ ແລະ ເດັກເປັນພະຍານ ເພື່ອຮັບປະກັນສິດ ຜົນປະໂຫຍດສູງສຸດຂອງເດັກ.

### ມາດຕາ 5 ຄວາມຈຳເປັນໃນການແກ້ໄຂຄະດີເດັກ

ລັດ ແລະ ສັງຄົມ ເຫັນຄວາມຈຳເປັນ ໃນການແກ້ໄຂຄະດີເດັກ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດສູງສຸດຂອງເດັກ. ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງແກ້ໄຂດ້ວຍວິທີການທີ່ເໝາະສົມ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 6 ສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕໍ່ເດັກຕົກໄປ

ສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕໍ່ເດັກຕົກໄປ ມີ ດັ່ງນີ້:

1. ຂາດເຫດການຂອງການກະທຳຜິດທາງອາຍາ;
2. ຂາດອົງປະກອບຂອງການກະທຳຜິດທາງອາຍາ;
3. ໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ;
4. ມີການໄກ່ເກ່ຍ ແລະ ສຶກສາອົບຮົມເດັກກະທຳຜິດແລ້ວ ໃນຄະດີທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕໍ່າກວ່າສາມປີ ແລະ ເປັນການກະທຳຜິດທີ່ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
5. ຂາດການຮ້ອງຟ້ອງ ຂອງຜູ້ຖືກເສຍຫາຍ ຫຼື ຜູ້ຖືກເສຍຫາຍ ຖອນຄຳຮ້ອງຟ້ອງ ໃນກໍລະນີການກະທຳຜິດທີ່ຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;
6. ມີການເສຍຊີວິດຂອງເດັກກະທຳຜິດ ຍົກເວັ້ນກໍລະນີ ການເສຍຊີວິດ ໃນເວລາດຳເນີນຄະດີຢູ່ສານ;
7. ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ກ່ຽວກັບຄະດີດຽວກັນ.

### ມາດຕາ 7 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

ໃນທຸກຂັ້ນຕອນຂອງການດຳເນີນຄະດີນັ້ນ ເດັກຕ້ອງໄດ້ຮັບ ການຊ່ວຍເຫຼືອທາງດ້ານກົດໝາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດ ຈາກການທຳຮ້າຍຮ່າງກາຍ, ການທໍລະມານ, ການ

ບັງຄັບນາບຊູ່, ການລະເມີດກຽດສັກສີ ຫຼື ຊັບສິນ ແລະ ການພິຈາລະນາຕັດສິນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ.

ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ໃຫ້ປະຕິບັດ ດັ່ງນີ້:

1. ເຄົາລົບ ກຽດສັກສີ ແລະ ຄຸນຄ່າຂອງເດັກ;

2. ເອົາຄຳໃຫ້ການຂອງເດັກ ບົນພື້ນຖານການຊັ່ງຊາລະດັບອາຍຸ ແລະ ຄວາມສາມາດຂອງເດັກໃນການຈຳແນກຄວາມຖືກ-ຄວາມຜິດ;

3. ໃຫ້ ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງຂອງເດັກ ເຂົ້າຮ່ວມໃນທຸກຂັ້ນຕອນຂອງການດຳເນີນຄະດີ;

4. ຮັກສາຄວາມລັບຂອງເດັກ;

5. ສຳພາດເດັກ ທີ່ຖືກເຄາະຮ້າຍ, ເປັນພະຍານ ແລະ ເດັກພິການ ດ້ວຍຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຖ້າມີຄວາມຈຳເປັນ.

### ມາດຕາ 8 ການປົກປ້ອງຜູ້ດຳເນີນຄະດີເດັກ ແລະ ຜູ້ເຂົ້າຮ່ວມ

ຜູ້ພິພາກສາ, ພະນັກງານໄອຍະການ, ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ພະນັກງານອື່ນຂອງອົງການດຳເນີນຄະດີເດັກ ລວມທັງ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຕ້ອງໄດ້ຮັບການປົກປ້ອງຕາມລະບຽບກົດໝາຍ ຈາກການຂົ່ມຂູ່ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ.

### ມາດຕາ 9 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບການດຳເນີນຄະດີເດັກທີ່ມີການ ຮ້ອງຂໍ, ຮ້ອງຟ້ອງ ຫຼື ແຈ້ງຄວາມ ຢູ່ ສປປ ລາວ.

### ມາດຕາ 10 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການດຳເນີນຄະດີເດັກ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ພະນັກງານທີ່ກ່ຽວຂ້ອງ, ການປະສານງານ ແລະ ຍາດແຍ່ງການຊ່ວຍເຫຼືອ ໂດຍສອດຄ່ອງກັບ ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ຫຼັກການພື້ນຖານ

**ມາດຕາ 11 ຫຼັກການພື້ນຖານໃນການດຳເນີນຄະດີເດັກ**

ໃນການດຳເນີນຄະດີເດັກ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ການກະທຳຜິດຂອງເດັກ ທີ່ບໍ່ໃຫ້ດຳເນີນຄະດີທາງອາຍາ;
2. ການໄກ່ເກ່ຍ ຫຼື ການຕັດສິນຄະດີ;
3. ການບໍ່ໃຫ້ລ່ວງລະເມີດສິດ ແລະ ເສລີພາບຂອງເດັກ;
4. ການຮັບປະກັນສິດຂອງເດັກ ໃນການຕໍ່ສູ້ຄະດີ;
5. ການພິຈາລະນາຄ່າເສັຍຫາຍໃນຄະດີເດັກ;
6. ການຮັກສາຄວາມລັບ;
7. ການເຂົ້າຮ່ວມຂອງເດັກ ແລະ ພໍ່ແມ່ ຫຼື ຜູ້ປົກຄອງ ຫຼື ຜູ້ປົກປ້ອງເດັກ;
8. ການແຕ່ງຕັ້ງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ.

ສຳລັບ ຫຼັກການ ນິຕິທຳ, ຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານ, ການສັນນິຖານວ່າເປັນຜູ້ບໍລິສຸດ, ການພິຈາລະນາຄະດີເປັນໝູ່ຄະນະ, ຄວາມເປັນເອກະລາດຂອງຜູ້ພິພາກສາ, ພາສາທີ່ໃຊ້ໃນການດຳເນີນຄະດີ, ການຂໍຖອນຕົວ ແລະ ການຄ້ານຕົວ, ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ, ການດຳເນີນຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ການຮັບປະກັນສິດໃນການຮ້ອງຟ້ອງ ແລະ ການປະສານສົມທົບ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ.

**ມາດຕາ 12 ການກະທຳຜິດຂອງເດັກ ທີ່ບໍ່ໃຫ້ດຳເນີນຄະດີທາງອາຍາ**

ເດັກກະທຳຜິດທີ່ມີອາຍຸ ຕ່ຳກວ່າ ສິບແປດ ປີ ຫາກໄດ້ກໍ່ຄວາມເສັຍຫາຍເລັກໜ້ອຍ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບ ຕ່ຳກວ່າ ສາມ ປີ ແລະ ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຊຶ່ງມີການຮັບສາລະພາບຂອງເດັກ ແລະ ການຍິນຍອມໃຫ້ໄກ່ເກ່ຍຂອງຄູ່ກໍລະນີ ຈະບໍ່ອະນຸຍາດໃຫ້ດຳເນີນຄະດີທາງອາຍາ.

**ມາດຕາ 13 ການໄກ່ເກ່ຍ ຫຼື ການຕັດສິນຄະດີ**

ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ, ຫ້ອງການຍຸຕິທຳ ເມືອງ, ເທດສະບານ, ໜ່ວຍງານສືບສວນ-ສອບສວນ ຄະດີເດັກ, ໜ່ວຍງານໄອຍະການເດັກ ຕ້ອງທຳການໄກ່ເກ່ຍ ແລະ ວາງມາດຕະການຕໍ່ເດັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງກົດໝາຍສະບັບນີ້.

ສຳລັບການກະທຳຜິດຂອງເດັກທີ່ມີໂທດຕັດອິດສະລະພາບແຕ່ ສາມປີ ຂຶ້ນໄປ ສາມາດໄກ່ເກ່ຍແຕ່ຄ່າເສັຍຫາຍທາງແພ່ງ, ສ່ວນວິທີການໄກ່ເກ່ຍນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ.

ມີແຕ່ສານເດັກ ຫຼື ຄະນະສານເດັກເທົ່ານັ້ນ ທີ່ມີສິດອຳນາດໃນການພິຈາລະນາຕັດສີນ.

## ມາດຕາ 14 ການບໍ່ໃຫ້ລ່ວງລະເມີດສິດ ແລະ ເສລີພາບຂອງເດັກ

ບໍ່ອະນຸຍາດໃຫ້ກັກຕົວເດັກ ໂດຍບໍ່ມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ.

ບໍ່ອະນຸຍາດໃຫ້ ຈັບຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ຫຼື ສານ ບ່ອນການກະທຳຜິດເກີດຂຶ້ນ ເວັ້ນເສັຍແຕ່ການຈັບຕົວ, ການກວດຄົ້ນເຄຫະສະຖານ ໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນເທົ່ານັ້ນ.

ບຸກຄົນທີ່ໄດ້ ກັກຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ຫຼື ຕົວເດັກ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກດຳເນີນຄະດີ ແລະ ຮັບຜິດຊອບທາງອາຍາ ພ້ອມທັງໃຊ້ແທນຄ່າເສັຍຫາຍທີ່ເກີດຂຶ້ນ.

## ມາດຕາ 15 ການຮັບປະກັນສິດຂອງເດັກ ໃນການຕໍ່ສູ້ຄະດີ

ໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ ແລະ ສານເດັກ ຫຼື ຄະນະສານເດັກ ຕ້ອງຮັບປະກັນສິດໃນການຕໍ່ສູ້ຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເດັກ.

ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງເດັກ ມີສິດ ໂຕ້ແຍ່ງ, ໂຕ້ຖຽງ, ສະເໜີຫຼັກຖານລວມທັງ ເດັກຖືກກ່າວຫາ, ເດັກຖືກເຄາະຮ້າຍ ແລະ ເດັກເປັນພະຍານ ກໍມີສິດໃຫ້ຄຳຄິດເຫັນກ່ຽວກັບເຫດການທີ່ເກີດຂຶ້ນ ແລະ ຈະບໍ່ຖືກບັງຄັບໃຫ້ຊອກຫາຫຼັກຖານ ມາຢັ້ງຢືນຄວາມບໍລິສຸດຂອງຕົນ.

## ມາດຕາ 16 ການພິຈາລະນາຄ່າເສັຍຫາຍໃນຄະດີເດັກ

ການພິຈາລະນາການໃຊ້ແທນຄ່າເສັຍຫາຍໃນຄະດີເດັກ ຕ້ອງດຳເນີນໄປພ້ອມກັນກັບການພິຈາລະນາຕັດສີນຄະດີທາງອາຍາ. ໃນກໍລະນີທີ່ສານ ຍັງບໍ່ສາມາດກຳນົດມູນຄ່າຄວາມເສັຍຫາຍໄດ້ ເຊັ່ນ ຄະດີອຸປະຕິເຫດ ຫຼື ເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ ແລະ ຄະດີອື່ນ ຊຶ່ງຜູ້ຖືກເສັຍຫາຍຍັງຕ້ອງສືບຕໍ່ປິ່ນປົວ ສານຈະພິຈາລະນາຕັດສີນຄະດີທາງອາຍາກ່ອນ, ສ່ວນການໃຊ້ແທນຄ່າເສັຍຫາຍທາງແພ່ງ ໃຫ້ດຳເນີນດ້ວຍການໄກ່ເກ່ຍ ຫຼື ການຕັດສີນຂອງສານດ້ວຍການເຂົ້າຮ່ວມຂອງຜູ້ຮັບຜິດຊອບທາງແພ່ງ.

ໃນກໍລະນີທີ່ ເດັກເປັນຈໍາເລີຍ ຫາກໄດ້ເສຍຊີວິດໃນເວລາດໍາເນີນຄະດີຢູ່ສານ ໃຫ້ສານທໍາການພິຈາລະນາຄະດີຈົນເປັນທີ່ສິ້ນສຸດ ຕາມລະບຽບກົດໝາຍ.

**ມາດຕາ 17 ການຮັກສາຄວາມລັບ**

ໃນທຸກຂັ້ນຕອນຂອງການດໍາເນີນຄະດີເດັກ ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງໄດ້ຮັກສາ ຄວາມລັບ ແລະ ປະຫວັດຜ່ານມາຂອງເດັກ.

ໃນການໄກ່ເກ່ຍ, ການສືບສວນ-ສອບຖາມ, ການສໍາພາດ, ການໄຕ່ສວນໃນທີ່ປະຊຸມສານ ຕ້ອງດໍາເນີນຢ່າງປິດລັບ.

**ມາດຕາ 18 ການເຂົ້າຮ່ວມຂອງເດັກ ແລະ ພໍ່ແມ່ ຫຼື ຜູ້ປົກຄອງ ຫຼື ຜູ້ປົກປ້ອງເດັກ**

ໃນທຸກຂັ້ນຕອນຂອງການດໍາເນີນຄະດີເດັກ ຕ້ອງໃຫ້ມີການເຂົ້າຮ່ວມຂອງເດັກ, ພໍ່ແມ່, ຜູ້ປົກຄອງ ຫຼື ທະນາຍຄວາມ ຫຼື ຜູ້ປົກປ້ອງເດັກ ເວັ້ນເສຍແຕ່ມີຂໍ້ສົງໄສວ່າບຸກຄົນເຫຼົ່ານີ້ ເປັນຜູ້ກະທໍາຜິດຕໍ່ເດັກ ຫຼື ກໍລະນີ ທີ່ເຫັນວ່າເດັກມີຄວາມກັງວົນ ຍ້ອນການເຂົ້າຮ່ວມຂອງບຸກຄົນດັ່ງກ່າວ.

**ມາດຕາ 19 ການແຕ່ງຕັ້ງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ**

ໃນທຸກຂັ້ນຕອນຂອງການດໍາເນີນຄະດີເດັກ ຕ້ອງມີທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ. ຖ້າຫາກບໍ່ມີທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ອົງການທີ່ດໍາເນີນຄະດີນັ້ນ ຕ້ອງສະເໜີຕໍ່ສະພາທະນາຍຄວາມ ຫຼື ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອແຕ່ງຕັ້ງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໂດຍໜ້າທີ່. ອົງການທີ່ໄດ້ຮັບຄໍາສະເໜີນັ້ນ ຕ້ອງໄດ້ແຕ່ງຕັ້ງພາຍໃນກໍານົດ ສາມວັນ ນັບແຕ່ວັນໄດ້ຮັບຄໍາສະເໜີ ເປັນຕົ້ນໄປ.

## ພາກທີ III
## ຜູ້ເຂົ້າຮ່ວມ ແລະ ອົງການທີ່ມີສິດ ໃນການດໍາເນີນຄະດີເດັກ
### ໝວດທີ 1
### ຜູ້ເຂົ້າຮ່ວມໃນການດໍາເນີນຄະດີເດັກ

**ມາດຕາ 20 ຜູ້ເຂົ້າຮ່ວມໃນການດໍາເນີນຄະດີເດັກ**

ຜູ້ເຂົ້າຮ່ວມໃນການດໍາເນີນຄະດີເດັກ ມີ:

1. ເດັກ ຖືກເຄາະຮ້າຍ ຫຼື ເປັນພະຍານ;
2. ເດັກເປັນ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈໍາເລີຍ, ຜູ້ຖືກເສຍຫາຍ;
3. ພໍ່, ແມ່ ຫຼື ຜູ້ປົກຄອງ;
4. ໂຈດ, ໂຈດທາງແພ່ງ;

5. ບຸກຄົນທີສາມ;
6. ຜູ້ຮັບຜິດຊອບທາງແພ່ງ;
7. ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ;
8. ຜູ້ຊ່ຽວຊານ;
9. ຜູ້ຊໍານານງານ;
10. ຜູ້ແປພາສາ;
11. ນັກສັງຄົມສົງເຄາະ ຫຼື ນັກຈິດຕະວິທະຍາ;
12. ຜູ້ຕາງໜ້າ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງສັງຄົມ;
13. ຄູ, ອາຈານ, ຜູ້ໃຊ້ວຽກ ຫຼື ຜູ້ໃຊ້ແຮງງານເດັກ.

ສິດ ແລະ ພັນທະ ຂອງຜູ້ເຂົ້າຮ່ວມ ແຕ່ຂໍ້ 2 ຫາ 10 ເທິງນີ້ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ, ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ, ກົດໝາຍວ່າດ້ວຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 21 ເດັກ ຖືກເຄາະຮ້າຍ ຫຼື ເປັນພະຍານ

ເດັກ ຖືກເຄາະຮ້າຍ ຫຼື ເປັນພະຍານ ສາມາດເຂົ້າຮ່ວມ ແລະ ສະເໜີຄໍາຄິດຄໍາເຫັນຂອງຕົນໃນທຸກຂັ້ນຕອນຂອງການດໍາເນີນຄະດີ ໂດຍມີພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ ເຂົ້າຮ່ວມນໍາ.

ເດັກ ຖືກເຄາະຮ້າຍ ຫຼື ເປັນພະຍານ ໃນການດໍາເນີນຄະດີອາຍາ ມີ ສິດ ດັ່ງນີ້:

1. ໄດ້ຮັບການເຄົາລົບທາງດ້ານກຽດສັກສີ ແລະ ຄຸນຄ່າຂອງມະນຸດ;
2. ອອກຄໍາເຫັນ ຊຶ່ງຕ້ອງໄດ້ຮັບການພິຈາລະນາ ບົນພື້ນຖານການຊັ່ງຊາລະດັບອາຍຸ ແລະ ຄວາມສາມາດຂອງເດັກໃນການຈໍາແນກຄວາມຖືກ-ຄວາມຜິດ;
3. ໄດ້ຮັບການຊ່ວຍເຫຼືອຈາກພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງທາງກົດໝາຍ ໃນທຸກຂັ້ນຕອນຂອງການດໍາເນີນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງເດັກ ລວມທັງການຟື້ນຟູຮ່າງກາຍ ແລະ ຈິດໃຈ;
4. ໄດ້ຮັບການຮັກສາຄວາມລັບ ແລະ ຄວາມເປັນສ່ວນຕົວ;
5. ໄດ້ຮັບການປົກປ້ອງຈາກການບັງຄັບ, ຂົ່ມຂູ່, ຈໍາແນກ ຫຼື ອັນຕະລາຍທຸກຮູບແບບ ລວມທັງສະມາຊິກຄອບຄົວຂອງຕົນ;
6. ໄດ້ຮັບສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

### ມາດຕາ 22 ນັກສັງຄົມສົງເຄາະ ຫຼື ນັກຈິດຕະວິທະຍາ

ນັກສັງຄົມສົງເຄາະ ຫຼື ນັກຈິດຕະວິທະຍາ ສາມາດເຂົ້າຮ່ວມໃນທຸກຂັ້ນຕອນ ຂອງການດຳເນີນຄະດີເດັກ ເພື່ອປະຕິບັດ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ການຊ່ວຍເຫຼືອ ຊອກຫາບ່ອນພັກເຊົາແກ່ເດັກ;
2. ຊອກຫາພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກ;
3. ຊອກຫາສາເຫດ ສະພາບແວດລ້ອມຂອງເດັກ;
4. ຟື້ນຟູດ້ານຈິດຕະສາດຂອງເດັກ ແລະ ຊ່ວຍເຫຼືອເດັກ ໃນການກັບຄືນສູ່ຄອບຄົວ ແລະ ສັງຄົມ;
5. ຕິດຕາມເດັກ ຕາມການຕັດສິນຂອງສານ ຫຼື ຕາມມາດຕະການທີ່ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ຫຼື ຫ້ອງການຍຸຕິທຳເມືອງ, ເທດສະບານ, ໜ່ວຍງານສືບສວນ-ສອບສວນຄະດີເດັກ ແລະ ໜ່ວຍງານໄອຍະການເດັກ ວາງໃສ່ເດັກ;
6. ໃຫ້ຄຳປຶກສາແກ່ເດັກ, ຕິດຕາມ, ບຳບັດ ແລະ ຟື້ນຟູ ທາງດ້ານຮ່າງກາຍ ແລະ ຈິດໃຈຂອງເດັກ;
7. ເຂົ້າຮ່ວມ ການສອບຖາມ, ການສຳພາດເດັກ ແລະ ການໄກ່ເກ່ຍຄະດີເດັກ;
8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

### ມາດຕາ 23 ຜູ້ຕາງໜ້າ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງສັງຄົມ

ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງສັງຄົມທີ່ກ່ຽວຂ້ອງ ສາມາດແຕ່ງຕັ້ງຜູ້ຕາງໜ້າ ເຂົ້າຮ່ວມການແກ້ໄຂຄະດີເດັກ ໃນກໍລະນີທີ່ພົວພັນກັບການຈັດຕັ້ງຂອງຕົນ ຫຼື ເປັນຜູ້ປົກປ້ອງເດັກ.

### ມາດຕາ 24 ຄູ, ອາຈານ, ຜູ້ໃຊ້ວຽກ ຫຼື ຜູ້ໃຊ້ແຮງງານເດັກ

ຄູ, ອາຈານ, ຜູ້ໃຊ້ວຽກ ຫຼື ຜູ້ໃຊ້ແຮງງານເດັກ ມີສິດເຂົ້າຮ່ວມໃນການດຳເນີນຄະດີເດັກ ໃນຖານະເປັນ ພະຍານ, ຜູ້ປົກປ້ອງເດັກ ຫຼື ຜູ້ຮັບຜິດຊອບທາງແພ່ງ, ໃຫ້ຄວາມຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ໃນການສະໜອງຂໍ້ມູນກ່ຽວກັບເດັກເປັນ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ ຫຼື ຜູ້ຖືກເຄາະຮ້າຍ, ພ້ອມກັນນັ້ນ ກໍມີພັນທະໃນການສຶກສາອົບຮົມ ແລະ ຕິດຕາມເດັກ ໃຫ້ກາຍເປັນພົນລະເມືອງດີ.

### ມາດຕາ 25 ບຸກຄົນ ທີ່ບໍ່ອະນຸຍາດໃຫ້ເປັນຜູ້ຕາງໜ້າ ຫຼື ຜູ້ປົກປ້ອງເດັກ

ບຸກຄົນທີ່ບໍ່ອະນຸຍາດໃຫ້ເປັນຜູ້ຕາງໜ້າ ຫຼື ຜູ້ປົກປ້ອງເດັກ ມີ ດັ່ງນີ້:

1. ຜູ້ເຄີຍໄດ້ກະທຳຜິດຕໍ່ເດັກ;
2. ຜູ້ບໍ່ໄດ້ຮັບມອບສິດຢ່າງຖືກຕ້ອງ;

3. ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ;

4. ຜູ້ຮັບຜິດຊອບໃນການແກ້ໄຂ ຫຼື ດຳເນີນຄະດີເດັກ;

5. ຜູ້ຖືກຄັດຄ້ານ ຈາກເດັກ ຫຼື ຈາກບຸກຄົນອື່ນ.

## ໝວດທີ 2
## ອົງການທີ່ມີສິດໃນການດຳເນີນຄະດີເດັກ

**ມາດຕາ 26 ອົງການທີ່ມີສິດແກ້ໄຂທາງດ້ານບໍລິຫານ**

**ອົງການທີ່ມີສິດແກ້ໄຂຄະດີເດັກທາງດ້ານບໍລິຫານ ມີ ດັ່ງນີ້:**

1. ໜ່ວຍໄກ່ເກັ່ຍຄະດີເດັກຂັ້ນບ້ານ;
2. ຫ້ອງການຍຸຕິທຳເມືອງ, ເທດສະບານ;
3. ໜ່ວຍງານສືບສວນ-ສອບສວນຄະດີເດັກ;
4. ໜ່ວຍງານໄອຍະການເດັກ;

ສຳລັບ ສິດ ແລະ ໜ້າທີ່ຂອງອົງການດັ່ງກ່າວ ໄດ້ກຳນົດໄວ້ໃນມາດຕາ 31, 32, 42, ແລະ 71 ຂອງກົດໝາຍສະບັບນີ້.

**ມາດຕາ 27 ອົງການທີ່ມີສິດອຳນາດໃນການດຳເນີນຄະດີເດັກ**

ອົງການທີ່ມີສິດອຳນາດໃນການດຳເນີນຄະດີເດັກ ມີ ດັ່ງນີ້:

1. ອົງການສືບສວນ-ສອບສວນ;
2. ອົງການໄອຍະການປະຊາຊົນ;
3. ສານເດັກ ແລະ ຄະນະສານເດັກ.

ອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ ສ້າງຕັ້ງໜ່ວຍງານສືບສວນ-ສອບສວນຄະດີເດັກ ແລະ ໜ່ວຍງານໄອຍະການເດັກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໜ້າທີ່ດຳເນີນຄະດີເດັກສະເພາະ.

## ພາກທີ IV
## ຮູບການ ການແກ້ໄຂຄະດີເດັກ

**ມາດຕາ 28 ຮູບການ ການແກ້ໄຂ**

ການແກ້ໄຂຄະດີເດັກ ໃຫ້ດຳເນີນດ້ວຍ ສອງ ຮູບການ ດັ່ງນີ້:

1. ການແກ້ໄຂຄະດີເດັກທາງດ້ານບໍລິຫານ;
2. ການແກ້ໄຂຄະດີເດັກ ຕາມຂະບວນການຍຸຕິທຳ.

**ມາດຕາ 29 ການແກ້ໄຂຄະດີເດັກທາງດ້ານບໍລິຫານ**

ການແກ້ໄຂຄະດີເດັກທາງດ້ານບໍລິຫານ ແມ່ນ ການແກ້ໄຂດ້ວຍໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ, ຫ້ອງການຍຸຕິທຳເມືອງ, ເທດສະບານ ໜ່ວຍງານສືບສວນ-ສອບສວນຄະດີເດັກ ແລະ ໜ່ວຍງານໄອຍະການເດັກ ສຳລັບຄະດີເດັກກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

ໃນກໍລະນີເດັກອາຍຸຕໍ່າກວ່າ ສິບຫ້າ ປີ ທີ່ໄດ້ກະທຳຜິດຢ່າງຮ້າຍແຮງ, ກະທຳຜິດເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ກະທຳຜິດໃນສະຖານຄະຣຸໂທດນັ້ນ ໃຫ້ອີງການທີ່ໄດ້ກຳນົດໄວ້ໃນວັກເທິງນີ້ ທຳການໄກ່ເກ່ຍ, ສຶກສາອົບຮົມ ພ້ອມທັງວາງມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງກົດໝາຍສະບັບນີ້.

ການກະທຳຂອງເດັກ ທີ່ມີອາຍຸແຕ່ ສິບຫ້າ ປີຂຶ້ນໄປ ແລະ ມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນ ແຕ່ໄດ້ກໍ່ຄວາມເສັຍຫາຍຕໍ່າກວ່າ 500.000 ກີບ ໃຫ້ແກ້ໄຂທາງດ້ານບໍລິຫານ ຍົກເວັ້ນການກະທຳຜິດທີ່ບໍ່ເຊັດຫຼາບ ຫຼື ເປັນອາຈິນ ຫຼື ການກະທຳຜິດອື່ນທີ່ເປັນອັນຕະລາຍ ເຊັ່ນ ການຊິງຊັບ ໃຫ້ແກ້ໄຂ ຕາມຂະບວນການຍຸຕິທຳ.

**ມາດຕາ 30 ການແກ້ໄຂຄະດີເດັກ ຕາມຂະບວນການຍຸຕິທຳ**

ການແກ້ໄຂຄະດີເດັກຕາມຂະບວນການຍຸຕິທຳ ແມ່ນ ການດຳເນີນການສືບສວນ-ສອບຖາມ, ການສຳພາດ, ການໄກ່ເກ່ຍ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ການນຳໃຊ້ມາດຕະການຕ່າງໆ ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ ແລະ ການພິຈາລະນາຕັດສິນຂອງສານ.

## ໝວດທີ 1
## ການແກ້ໄຂຄະດີເດັກທາງດ້ານບໍລິຫານ

**ມາດຕາ 31 ສິດ ແລະ ໜ້າທີ່ຂອງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ**

ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໄກ່ເກ່ຍຄະດີເດັກກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້;

2. ໄກ່ເກ່ຍບັນຫາທາງແພ່ງທີ່ພົວພັນກັບເດັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ;

3. ວາງມາດຕະການ ເພື່ອສຶກສາອົບຮົມ, ຕັກເຕືອນ ເດັກກະທຳຜິດ ແລະ ຊອກຫາວິທີການສະກັດກັ້ນ ການກະທຳຜິດຂອງເດັກ;

4. ຈັດຕັ້ງປະຕິບັດ ຜົນການໄກ່ເກ່ຍ, ຕິດຕາມ ຊຸກຍູ້ໃຫ້ຜູ້ຮັບຜິດຊອບທາງແພ່ງ ໃຊ້ແທນຄ່າເສັຍຫາຍ;

5. ສົ່ງສຳນວນເອກະສານທີ່ໄດ້ໄກ່ເກ່ຍສຳເລັດແລ້ວ ໃຫ້ຫ້ອງການຍຸຕິທຳເມືອງ, ເທດສະບານ ເປັນຜູ້ເກັບຮັກສາໄວ້ ແລະ ສົ່ງຜົນການໄກ່ເກ່ຍດັ່ງກ່າວໃຫ້ໜ່ວຍງານສືບສວນ-ສອບສວນຄະດີເດັກ ເພື່ອຕິດຕາມການເຄື່ອນໄຫວຂອງເດັກ. ໃນກໍລະນີການໄກ່ເກ່ຍ ຫາກບໍ່ສຳເລັດ ກໍຕ້ອງສົ່ງໃຫ້ຫ້ອງການຍຸຕິທຳເມືອງ, ເທດສະບານ ທຳການໄກ່ເກ່ຍຕື່ມອີກ;

6. ຕິດຕາມ ຫຼື ປະສານສົມທົບກັບຕາໜ່າງປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນບ້ານ ແລະ ອົງການອື່ນທີ່ກ່ຽວຂ້ອງ ໃນການຊ່ວຍເຫຼືອເດັກ ແລະ ສົ່ງເດັກກັບຄືນສູ່ຄອບຄົວ ແລະ ສັງຄົມ;

7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ໃນກໍລະນີທີ່ບໍ່ທັນໄດ້ສ້າງຕັ້ງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເປັນຜູ້ຮັບຜິດຊອບໄກ່ເກ່ຍ.

## ມາດຕາ 32 ສິດ ແລະ ໜ້າທີ່ຂອງຫ້ອງການຍຸຕິທຳເມືອງ, ເທດສະບານ

ໃນການໄກ່ເກ່ຍຄະດີເດັກ ຫ້ອງການຍຸຕິທຳເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳທາງດ້ານວິຊາການ ຕໍ່ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ;

2. ໄກ່ເກ່ຍ ແລະ ສຶກສາອົບຮົມ ເດັກກະທຳຜິດ ໃນຄະດີທີ່ສົ່ງມາຈາກໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ;

3. ຕິດຕາມ, ກວດກາ ການວາງມາດຕະການຕໍ່ເດັກກະທຳຜິດຂອງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ;

4. ເກັບກຳສະຖິຕິ ແລະ ເກັບຮັກສາ ສຳນວນເອກະສານຂອງເດັກກະທຳຜິດ ທີ່ຮັບຈາກໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ຫຼື ຕົນເອງເປັນຜູ້ໄກ່ເກ່ຍ;

5. ຈັດຕັ້ງປະຕິບັດຜົນການໄກ່ເກ່ຍ ຫຼື ຄຳຕົກລົງຂອງສານ ກ່ຽວກັບບັນຫາທາງແພ່ງໃນຄະດີເດັກ;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ໃນກໍລະນີ ບໍ່ສາມາດຕົກລົງ ຫຼື ໄກ່ເກ່ຍກັນໄດ້ ກ່ຽວກັບບັນຫາທາງແພ່ງນັ້ນ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານ.

## ມາດຕາ 33 ຂັ້ນຕອນກະກຽມການໄກ່ເກ່ຍຄະດີເດັກ

ການກະກຽມການໄກ່ເກ່ຍຄະດີເດັກ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ມີຄຳຮ້ອງ, ຄຳສະເໜີເປັນລາຍລັກອັກສອນຂອງຜູ້ຖືກເສັຍຫາຍ ຫຼື ມີສຳນວນຄະດີທີ່ສົ່ງມາຈາກອົງການສືບສວນ-ສອບສວນ ຫຼື ອົງການໄອຍະການປະຊາຊົນ. ໃນກໍລະນີມີ ການສະ

ເໜີທາງປາກເປົ່າ ອົງການທີ່ກ່ຽວຂ້ອງຕ້ອງເຮັດບົດບັນທຶກແລ້ວ ໃຫ້ຜູ້ສະເໜີນັ້ນເຊັນ ແລະ/ຫຼື ແປະໂປ້ມືໄວ້;

2. ປະກອບ ສຳນວນເອກະສານທີ່ກ່ຽວຂ້ອງກັບເຫດການຂອງຄະດີ;

3. ຄົ້ນຄວ້າເອກະສານ ເພື່ອກະກຽມໃຫ້ແກ່ການໄກ່ເກ່ຍ;

4. ກະກຽມຜູ້ໄກ່ເກ່ຍ, ກຳນົດ ວັນ ເວລາ, ຜູ້ເຂົ້າຮ່ວມ ແລະ ສະຖານທີ່ໄກ່ເກ່ຍທີ່ເໝາະສົມ;

5. ເຊີນຜູ້ກ່ຽວຂ້ອງເຂົ້າຮ່ວມການໄກ່ເກ່ຍ.

ການໄກ່ເກ່ຍຄະດີເດັກ ຕ້ອງດຳເນີນພາຍໃນ ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ຫຼື ຄຳສະເໜີ ເປັນຕົ້ນໄປ.

### ມາດຕາ 34 ຫຼັກການ ການໄກ່ເກ່ຍຄະດີເດັກ

ໃນການໄກ່ເກ່ຍຄະດີເດັກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ມີ ຂໍ້ມູນ, ຫຼັກຖານ ຮັດກຸມ, ໜັກແໜ້ນ ແລະ ຄົບຖ້ວນ;

2. ມີການຮັບສາລະພາບຂອງເດັກ ຕໍ່ການກະທຳຜິດຂອງຕົນ ແລະ ມີການຍິນຍອມໃຫ້ໄກ່ເກ່ຍຂອງຄູ່ກໍລະນີ;

3. ມີການເຂົ້າຮ່ວມຂອງ ເດັກ, ພໍ່ແມ່, ຜູ້ປົກຄອງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ;

4. ໃຫ້ຜູ້ໄກ່ເກ່ຍວາງຕົວເປັນກາງ;

5. ມີການຕົກລົງດ້ວຍຄວາມສະໝັກໃຈ ຂອງຄູ່ກໍລະນີ ໂດຍປາສະຈາກການບັງຄັບ, ນາບຂູ່ ຫຼື ໃຊ້ວິທີການອື່ນ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ;

6. ວາງມາດຕະການຕໍ່ເດັກ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ຮັບປະກັນ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງເດັກ;

ການໄກ່ເກ່ຍຢູ່ແຕ່ລະຂັ້ນ ສູງສຸດບໍ່ໃຫ້ເກີນ ສາມຄັ້ງ ແລະ ແຕ່ລະຄັ້ງ ຫ່າງກັນບໍ່ໃຫ້ເກີນສິບວັນ.

### ມາດຕາ 35 ວິທີການໄກ່ເກ່ຍຄະດີເດັກ

ຜູ້ໄກ່ເກ່ຍຄະດີເດັກ ຕ້ອງດຳເນີນຕາມວິທີການຕົ້ນຕໍ ດັ່ງນີ້:

1. ຊອກຮູ້ປະຫວັດ, ພຶດຕິກຳຜ່ານມາຂອງເດັກ, ສະພາບການດຳລົງຊີວິດຂອງຄອບຄົວເດັກ;

2. ຊອກຮູ້ສາເຫດຕົ້ນຕໍທີ່ພາໃຫ້ເດັກກະທຳຜິດ ໂດຍເຈດຕະນາ ຫຼື ຮູ້ເທົ່າບໍ່ເຖິງການ;

3. ໃຊ້ວາຈາ ສຸພາບ, ອ່ອນໂຍນ ແລະ ນິ້ມນວນ;

4. ໃຊ້ຄຳເວົ້າທີ່ເຂົ້າໃຈງ່າຍ, ມີລັກສະນະເປັນກັນເອງ ເພື່ອບໍ່ໃຫ້ເດັກເກີດຄວາມຢ້ານກົວ;

5. ສຶກສາອົບຮົມຄູ່ກໍລະນີໃຫ້ຮັບຮູ້ ເຂົ້າໃຈເຖິງເຫດການທີ່ເກີດຂຶ້ນ ແລ້ວໃຫ້ມີການປະນີປະນອມກັນ.

ນອກຈາກວິທີການທີ່ໄດ້ກໍານົດໄວ້ຂ້າງເທິງນີ້ແລ້ວ ການດໍາເນີນການໄກ່ເກ່ຍ ຍັງຕ້ອງປະຕິບັດ ຕາມລະບຽບການສະເພາະ.

## ມາດຕາ 36 ການວາງມາດຕະການຕໍ່ເດັກ

ເມື່ອມີຂໍ້ມູນຫຼັກຖານວ່າເດັກເປັນຜູ້ກະທໍາຜິດແລ້ວ ໃນເວລາໄກ່ເກ່ຍ ເຖິງວ່າມີການຕົກລົງ ຫຼື ບໍ່ຕົກລົງກັນກ່ຽວກັບບັນຫາທາງແພ່ງກໍຕາມ ອົງການທີ່ກ່ຽວຂ້ອງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ ຕ້ອງວາງມາດຕະການທີ່ເໝາະສົມ ໃສ່ເດັກ ດັ່ງນີ້:

1. ສຶກສາອົບຮົມໃຫ້ເດັກເຂົ້າໃຈຕໍ່ການກະທໍາຜິດຂອງຕົນ;
2. ໃຫ້ໄປຂໍອະໄພນໍາຜູ້ຖືກເສຍຫາຍດ້ວຍວິທີການອັນເໝາະສົມ;
3. ໃຊ້ແທນຄ່າເສັຍຫາຍທາງແພ່ງ ແຕ່ໃຫ້ພໍ່ແມ່ ຫຼື ຜູ້ປົກຄອງ ເປັນຜູ້ຮັບຜິດຊອບ;
4. ມອບໃຫ້ພໍ່ແມ່, ຜູ້ປົກຄອງ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ກ່າວເຕືອນ, ສຶກສາອົບຮົມ ແລະ ຕິດຕາມຢ່າງໃກ້ຊິດ;
5. ໃຫ້ເດັກ ເຂົ້າມາລາຍງານຕົວຕໍ່ ການຈັດຕັ້ງທີ່ກ່ຽວຂ້ອງ ຕາມວັນ ເວລາ ແລະ ສະຖານທີ່ ທີ່ໄດ້ກໍານົດໄວ້;
6. ນໍາໃຊ້ມາດຕະການອື່ນທີ່ເຫັນວ່າເໝາະສົມ ເຊັ່ນ ການອອກແຮງງານໃຫ້ສັງຄົມ ຕາມຄວາມເໝາະສົມກັບອາຍຸຂອງເດັກ.

ການວາງມາດຕະການໃສ່ເດັກນັ້ນ ບໍ່ໃຫ້ມີລັກສະນະເປັນການປະຈານ, ອອກແຮງງານໜັກ ຫຼື ອອກແຮງງານແບບເປິເປື້ອນ ຊຶ່ງຈະມີຜົນກະທົບຕໍ່ສຸຂະພາບຂອງເດັກ ແລະ ບໍ່ໃຫ້ລະເມີດກົດໝາຍວ່າດ້ວຍ ແຮງງານ.

## ມາດຕາ 37 ບົດບັນທຶກການໄກ່ເກ່ຍ

ການໄກ່ເກ່ຍຄະດີເດັກ ເຖິງວ່າຈະຕົກລົງກັນໄດ້ທັງໝົດ, ບາງສ່ວນ ຫຼື ບໍ່ສາມາດຕົກລົງກັນໄດ້ກໍຕາມ ຕ້ອງເຮັດບົດບັນທຶກ ຊຶ່ງມີຮ່າງແບບພິມສະເພາະ ໂດຍໃຫ້ມີ ຊື່ ແລະ ນາມສະກຸນຂອງຜູ້ໄກ່ເກ່ຍ; ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ເຂົ້າຮ່ວມ ເປັນຕົ້ນ ເດັກ, ພໍ່ແມ່, ທະນາຍຄວາມ ຫຼື ຜູ້ປົກຄອງເດັກ, ຜູ້ຖືກເສັຍຫາຍ ລວມທັງຜົນການໄກ່ເກ່ຍ, ການຈັດຕັ້ງປະຕິບັດ ແລະ ການວາງມາດຕະການໃສ່ເດັກ.

ຜູ້ໄກ່ເກ່ຍ ຕ້ອງອ່ານບົດບັນທຶກໃຫ້ຄູ່ກໍລະນີຟັງ ຫຼື ໃຫ້ຄູ່ກໍລະນີອ່ານບົດບັນທຶກນັ້ນເອງແລ້ວ ໃຫ້ຜູ້ເຂົ້າຮ່ວມລົງລາຍເຊັນ ແລະ/ຫຼື ແປະໂປ້ມືໄວ້ເປັນຫຼັກຖານ. ໃນກໍລະນີມີຮອຍລຶບ ຫຼື ຂີດຂ້າຂໍ້ຄວາມໃດໜຶ່ງນັ້ນ ໃຫ້ເຊັນ ຫຼື ແປະໂປ້ມື ຮັບຮູ້ໃສ່ໜ້າແຖວນັ້ນໄວ້.

ປຶດບັນທຶກການໄກ່ເກ່ຍ ຕ້ອງເຮັດເປັນສາມສະບັບ ໃຫ້ຄູ່ກໍລະນີຝ່າຍລະໜຶ່ງສະບັບ ແລະ ອີກສະບັບໜຶ່ງ ເກັບໄວ້ໃນສໍານວນ.

ສໍາເນົາປຶດບັນທຶກການໄກ່ເກ່ຍ ຂອງ ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ, ຫ້ອງການຍຸຕິທໍາ ເມືອງ, ເທດສະບານ, ໜ່ວຍງານສືບສວນ-ສອບສວນຄະດີເດັກ ຕ້ອງສົ່ງໃຫ້ໜ່ວຍງານໄອຍະການເດັກ ເພື່ອຕິດຕາມ.

**ມາດຕາ 38 ຜົນຂອງປຶດບັນທຶກການໄກ່ເກ່ຍ**

ປຶດບັນທຶກການໄກ່ເກ່ຍຂອງ ອົງການທີ່ກ່ຽວຂ້ອງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 26 ຂອງ ກົດໝາຍສະບັບນີ້ ມີຜົນໃຊ້ໄດ້ນັບແຕ່ວັນຄູ່ກໍລະນີລົງລາຍເຊັນເປັນຕົ້ນໄປ, ສໍາລັບປຶດບັນທຶກການໄກ່ເກ່ຍຢູ່ສານນັ້ນ ມີຜົນບັງຄັບໃຊ້ນັບແຕ່ວັນສານໄດ້ອອກຄໍາສັ່ງປະຕິບັດຜົນການໄກ່ເກ່ຍ ເປັນຕົ້ນໄປ.

ຄູ່ກໍລະນີ ຝ່າຍທີ່ໄດ້ຮັບຄວາມເສັຽປະໂຫຍດ ຈາກການບໍ່ປະຕິບັດຜົນຂອງການແກ້ໄຂທາງດ້ານບໍລິຫານ ມີສິດຮ້ອງຂໍຕໍ່ສານ ໃຫ້ພິຈາລະນາອອກຄໍາຊີ້ຂາດ ເພື່ອບັງຄັບປະຕິບັດຜົນການໄກ່ເກ່ຍດັ່ງກ່າວ.

ເມື່ອໄດ້ຮັບຄໍາຮ້ອງຂໍ ຂອງຄູ່ກໍລະນີແລ້ວ ສານຕ້ອງພິຈາລະນາອອກຄໍາຊີ້ຂາດ ພາຍໃນສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍເປັນຕົ້ນໄປ.

ໃນການພິຈາລະນາອອກຄໍາຊີ້ຂາດນັ້ນ ສານຕ້ອງກວດເບິ່ງການດໍາເນີນການໄກ່ເກ່ຍ ວ່າໄດ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ຫຼື ບໍ່. ຖ້າເຫັນວ່າຖືກຕ້ອງແລ້ວ ສານຕ້ອງອອກຄໍາຊີ້ຂາດຢັ້ງຢືນເອົາ, ໃນກໍລະນີບໍ່ຖືກຕ້ອງຕາມລະບຽບກົດໝາຍ ສານກໍຈະອອກຄໍາຊີ້ຂາດບໍ່ຢັ້ງຢືນ ແຕ່ຄູ່ກໍລະນີສາມາດຮ້ອງຟ້ອງທາງແພ່ງຕໍ່ສານເດັກ.

ຄໍາຊີ້ຂາດຂອງສານ ມີຜົນບັງຄັບປະຕິບັດໃນທັນໃດ ແລະ ບໍ່ສາມາດຂໍອຸທອນໄດ້.

ຄ່າທໍານຽມຂອງການໄກ່ເກ່ຍ ໃຫ້ປະຕິບັດຕາມລະບຽບກົດໝາຍ.

## ໝວດທີ 2
## ການແກ້ໄຂຄະດີເດັກ ຕາມຂະບວນການຍຸຕິທໍາ

**ມາດຕາ 39 ເດັກກະທໍາຜິດ**

ເດັກກະທໍາຜິດ ຊຶ່ງຕ້ອງດໍາເນີນການແກ້ໄຂຕາມຂະບວນການຍຸຕິທໍາ ແມ່ນ ເດັກທີ່ມີອາຍຸແຕ່ ສິບຫ້າປີ ຂຶ້ນໄປ ແຕ່ບໍ່ເຖິງ ສິບແປດປີ ຊຶ່ງມີການກະທໍາ ຫຼື ການເມີນເສີຍ ທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ທີ່ກົດໝາຍໄດ້ກໍານົດໂທດ ຕັດອິດສະລະພາບແຕ່ ສາມປີ ຂຶ້ນໄປ, ການກະທໍາຜິດບໍ່ເຂັດຫຼາບ, ເປັນອາຈິນ ແລະ ມີອົງປະກອບການກະທໍາຜິດທາງອາຍາ.

### ມາດຕາ 40 ສິດຂອງເດັກທີ່ຖືກດຳເນີນຄະດີ

ໃນການດຳເນີນຄະດີອາຍາ ເດັກເປັນຜູ້ຖືກຫາ ຫຼື ເປັນຈຳເລີຍ ມີ ສິດ ດັ່ງນີ້:

1. ໄດ້ຮັບຊາບຂໍ້ກ່າວຫາ ແລະ ສິດໃນການຕໍ່ສູ້ຄະດີ;
2. ໄດ້ຮັບການໄກ່ເກ່ຍກ່ຽວກັບຄ່າເສຍຫາຍທາງແພ່ງ;
3. ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ຈາກທະນາຍຄວາມ ຫຼື ຜູ້ປົກປ້ອງທີ່ຖືກຕ້ອງຕາມກົດໝາຍ;
4. ໃຫ້ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ ເຂົ້າຮ່ວມໃນທຸກຂັ້ນຕອນຂອງການດຳເນີນຄະດີອາຍາ;
5. ໄດ້ຮັບການປະຕິບັດຢ່າງເໝາະສົມ ໃນທຸກຂັ້ນຕອນຂອງການດຳເນີນຄະດີ ໂດຍບໍ່ມີການບັງຄັບ ນາບຂູ່ ແລະ ການໃຊ້ຄຳເວົ້າທີ່ແຕະຕ້ອງເຖິງກຽດສັກສີຂອງເດັກ;
6. ໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງ ຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
7. ໄດ້ຮັບການຮັກສາຄວາມລັບກ່ຽວກັບປະຫວັດ ແລະ ຄວາມລັບສ່ວນຕົວຂອງຕົນ;
8. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ V
## ອົງການສືບສວນ-ສອບສວນ

### ມາດຕາ 41 ອົງການສືບສວນ-ສອບສວນ

ເພື່ອຮັບປະກັນການປະຕິບັດສິດ ແລະ ໜ້າທີ່ຂອງຕົນ ອົງການສືບສວນ-ສອບສວນ ມີໜ່ວຍງານສືບສວນ-ສອບສວນຄະດີເດັກ ຊຶ່ງຖືກສ້າງຕັ້ງຂຶ້ນໂດຍກະຊວງປ້ອງກັນຄວາມສະຫງົບ.

ເຈົ້າໜ້າທີ່ສືບສວນ-ສອບສວນຄະດີເດັກ ຕ້ອງແມ່ນຜູ້ທີ່ໄດ້ຮັບການຝຶກອົບຮົມສະເພາະ ກ່ຽວກັບການດຳເນີນຄະດີເດັກ.

ໂຄງປະກອບບຸກຄະລາກອນ ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 42 ສິດ ແລະ ໜ້າທີ່ຂອງໜ່ວຍງານສືບສວນ-ສອບສວນ ຄະດີເດັກ

ໜ່ວຍງານສືບສວນ-ສອບສວນຄະດີເດັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ແລະ ບັນທຶກ ການຮ້ອງຟ້ອງ ຫຼື ແຈ້ງຄວາມ;
2. ສະເໜີຂໍຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ ແລະ ສົ່ງສຳເນົາຄຳສັ່ງດັ່ງກ່າວລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນ;
3. ດຳເນີນການສືບສວນ-ສອບສວນ, ສືບສວນ-ສອບຖາມ, ສຳພາດ ແລະ ສະຫຼຸບຄະດີເດັກ ເພື່ອສົ່ງໃຫ້ອົງການໄອຍະການປະຊາຊົນ;

4. ສະເໜີຂໍນໍາໃຊ້ມາດຕະການສະກັດກັ້ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລາຍງານເປັນລາຍລັກອັກສອນ ໃຫ້ຫົວໜ້າອົງການໄອຍະການປະຊາຊົນ;

5. ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງ ຕາມການມອບໝາຍ;

6. ໄກ່ເກ່ຍ ແລະ ວາງມາດຕະການໃສ່ເດັກກະທໍາຜິດຕາມມາດຕາ 36 ຂອງກົດໝາຍສະບັບນີ້;

7. ສະເໜີຂໍຄໍາສັ່ງໂຈະ ຫຼື ຊັດມ້ຽນຄະດີ ຕໍ່ຫົວໜ້າອົງການສືບສວນ-ສອບສວນ ແລ້ວລາຍງານຕໍ່ອົງການໄອຍະການປະຊາຊົນໃນທັນໃດ;

8. ໄດ້ຮັບການບໍາລຸງ ຫຼື ຍົກລະດັບວິຊາການ ກ່ຽວກັບການດໍາເນີນຄະດີເດັກ;

9. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 1
## ການເປີດການສືບສວນ-ສອບສວນ

### ມາດຕາ 43 ການເປີດການສືບສວນ-ສອບສວນ

ການເປີດການສືບສວນ-ສອບສວນ, ການປ່ຽນແປງ ຫຼື ເພີ່ມເຕີມ ຄໍາສັ່ງເປີດການສືບສວນ-ສອບສວນຄະດີເດັກ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

### ມາດຕາ 44 ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ

ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນຄະດີເດັກ ມີ ດັ່ງນີ້:

1. ມີຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ ຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການກະທໍາຜິດຂອງເດັກ ຫຼື ການພົບເຫັນເດັກຖືກເຄາະຮ້າຍ;

2. ມີການເຂົ້າມອບຕົວຂອງເດັກກະທໍາຜິດຕໍ່ໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍະການເດັກ;

3. ພົບເຫັນຮ່ອງຮອຍການກະທໍາຜິດຂອງເດັກ ຫຼື ເດັກຖືກເຄາະຮ້າຍ ໂດຍໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍະການເດັກ;

4. ມີການຈັບຕົວ ກັກຕົວ ໃນກໍລະນີເຊິ່ງໜ້າ ຫຼື ຮີບດ່ວນ.

ໃນເວລາຄົ້ນຄວ້າ ພິຈາລະນາ ຄະດີຢູ່ສານ ຫາກພົບເຫັນຫຼັກຖານ ກ່ຽວກັບການກະທໍາຜິດໃໝ່ ຕ້ອງສະເໜີໃຫ້ອົງການໄອຍະການປະຊາຊົນ ເປີດການສືບສວນ-ສອບສວນຄະດີເພີ່ມເຕີມ.

### ມາດຕາ 45 ຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ

ຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ ກ່ຽວກັບການກະທໍາຜິດທາງອາຍາຂອງເດັກ ຫຼື ການພົບເຫັນເດັກຖືກເຄາະຮ້າຍ ໃຫ້ແຈ້ງທາງປາກເປົ່າ ຫຼື ເຮັດເປັນລາຍລັກອັກສອນ ແລະ ໃຫ້ຍື່ນ ຫຼື ແຈ້ງ

ຕໍ່ໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍະການເດັກ ຊຶ່ງຕ້ອງຮັບ ແລະ ພິຈາລະນາ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້. ສຳລັບ ຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ຂອງອົງການຈັດຕັ້ງ ຕ້ອງເຮັດເປັນລາຍລັກອັກສອນ.

ໃນກໍລະນີ ຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມ ໄດ້ເຂົ້າມາດ້ວຍຕົນເອງ ຊຶ່ງບໍ່ແມ່ນກໍລະນີເຊິ່ງໜ້າ ຫຼື ຮີບດ່ວນ ພະນັກງານຜູ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ຕ້ອງເຮັດບົດບັນທຶກເອົາຂໍ້ມູນກ່ຽວກັບປະຫວັດ, ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຂອງຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມ, ເນື້ອໃນຂອງຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ແລ້ວ ໃຫ້ພະນັກງານ ແລະ ຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມນັ້ນລົງລາຍເຊັນ.

ບົດບັນທຶກດັ່ງກ່າວ ຕ້ອງເຮັດເປັນສອງສະບັບ ແລ້ວມອບສະບັບໜຶ່ງ ໃຫ້ຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມ, ສ່ວນອີກໜຶ່ງສະບັບ ໃຫ້ເກັບໄວ້ໃນສຳນວນຄະດີ.

ພະນັກງານຜູ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ຕ້ອງແຈ້ງໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຊາບ ກ່ຽວກັບຄວາມຮັບຜິດຊອບຕາມກົດໝາຍ ໃນກໍລະນີທີ່ຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມນັ້ນ ຫາກບໍ່ມີມູນຄວາມຈິງ ຫຼື ເປັນການເທັດ.

**ມາດຕາ 46 ການເຂົ້າມອບຕົວຂອງເດັກກະທຳຜິດ**

ການເຂົ້າມອບຕົວຂອງເດັກກະທຳຜິດ ແມ່ນ ການເຂົ້າສະເໜີຕົວດ້ວຍຄວາມສະໝັກໃຈຂອງເດັກກະທຳຜິດ ເພື່ອລາຍງານ ກ່ຽວກັບການກະທຳຂອງຕົນ ຕໍ່ໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍະການເດັກ.

ພະນັກງານຜູ້ຮັບການເຂົ້າມອບຕົວນັ້ນ ຕ້ອງເຮັດບົດບັນທຶກ ກ່ຽວກັບຊີວະປະຫວັດ ແລະ ຄຳໃຫ້ການຂອງຜູ້ເຂົ້າມອບຕົວ. ໃນກໍລະນີທີ່ຜູ້ກ່ຽວ ຫາກເຂົ້າມອບຕົວຕໍ່ອົງການອື່ນທີ່ບໍ່ມີສິດໃນການດຳເນີນຄະດີເດັກ ອົງການດັ່ງກ່າວຕ້ອງນຳສົ່ງເດັກນັ້ນ ໃຫ້ໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍະການເດັກ ບ່ອນໃກ້ຄຽງໃນທັນໃດ.

ການເຂົ້າມອບຕົວຂອງເດັກກະທຳຜິດ ຕ້ອງແຈ້ງໃຫ້ພໍ່ແມ່, ຜູ້ປົກຄອງ, ການຈັດຕັ້ງ ຫຼື ອົງການປົກຄອງບ້ານທີ່ກ່ຽວຂ້ອງໃນທັນໃດ.

**ມາດຕາ 47 ການພົບເຫັນຮ່ອງຮອຍການກະທຳຜິດ**

ເມື່ອໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ ຫາກພົບເຫັນຮ່ອງຮອຍການກະທຳຜິດຂອງເດັກ ຫຼື ເດັກຖືກເຄາະຮ້າຍ ຕ້ອງເຮັດບົດບັນທຶກ ກ່ຽວກັບສະພາບເຫດການທີ່ພົບເຫັນ ແລະ ເກັບກຳຂໍ້ມູນໃນເບື້ອງຕົ້ນ ເພື່ອໃຊ້ເປັນພື້ນຖານໃຫ້ແກ່ການເປີດການສືບສວນ-ສອບສວນ.

ໃນກໍລະນີໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍາການເດັກ ໄດ້ເລີ່ມດໍາເນີນແລ້ວ ຫາກເຫັນວ່າໃນເວລາກະທໍາຜິດນັ້ນ ບຸກຄົນດັ່ງກ່າວມີອາຍຸຮອດ ສິບແປດປີ ແລ້ວ ກໍໃຫ້ສົ່ງສໍານວນຄະດີ ໄປຍັງອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ເປັນຜູ້ດໍາເນີນຕາມກົດໝາຍ.

ສໍາລັບ ເດັກຖືກເຄາະຮ້າຍ ຫຼື ເດັກເປັນພະຍານ ໃຫ້ດໍາເນີນຕາມມາດຕາ 50, 51 ແລະ 52 ຂອງກົດໝາຍສະບັບນີ້.

ສໍາລັບການ ຈັບຕົວ ກັກຕົວ ໃນກໍລະນີເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

### ມາດຕາ 48 ກໍານົດເວລາໃນການພິຈາລະນາ ຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ

ໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ ຕ້ອງພິຈາລະນາຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ ບໍ່ໃຫ້ເກີນກໍານົດ ສາມວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ ເປັນຕົ້ນໄປ.

ໃນກໍລະນີຄະດີມີຄວາມຫຍຸ້ງຍາກສັບສົນນັ້ນ ກໍານົດເວລາພິຈາລະນາ ບໍ່ໃຫ້ເກີນ ຫ້າວັນ ແລະ ຕ້ອງສະເໜີຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການປະຊາຊົນ ເພື່ອລົງຄໍາເຫັນໃດໜຶ່ງ ດັ່ງນີ້:

1. ອອກຄໍາສັ່ງເປີດການສືບສວນ-ສອບສວນ;
2. ອອກຄໍາສັ່ງບໍ່ເປີດການສືບສວນ-ສອບສວນ;
3. ສົ່ງຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມໄປໃຫ້ອົງການທີ່ມີສິດພິຈາລະນາ.

ໃນການພິຈາລະນາ ຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມນັ້ນ ກ່ອນຈະອອກຄໍາສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ ພະນັກງານຜູ້ດໍາເນີນ ສາມາດທວງເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ແລະ ຟັງຄໍາອະທິບາຍ ທີ່ຈໍາເປັນຈາກຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມ ກໍໄດ້.

ໃນກໍລະນີ ທີ່ມີຂໍ້ມູນຫຼັກຖານໜັກແໜ້ນ ກ່ຽວກັບການກະທໍາຜິດ ກໍຕ້ອງອອກຄໍາສັ່ງເປີດການສືບສວນ-ສອບສວນ ຫຼື ຖ້າບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ ຫຼື ມີສາເຫດທີ່ພາໃຫ້ການດໍາເນີນຄະດີອາຍາຕົກໄປ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າ ດ້ວຍການດໍາເນີນຄະດີອາຍາ ກໍຕ້ອງອອກຄໍາສັ່ງບໍ່ເປີດການສືບສວນ-ສອບສວນ.

## ໝວດທີ 2
## ວິທີການສືບສວນ-ສອບຖາມ ແລະ ການສໍາພາດເດັກ

### ມາດຕາ 49 ສະຖານທີ່ສືບສວນ-ສອບຖາມ ຫຼື ສໍາພາດເດັກ

ການສືບສວນ-ສອບຖາມ, ການສໍາພາດເດັກ ໃຫ້ດໍາເນີນຢູ່ສະຖານທີ່ ທີ່ເໝາະສົມ ຫຼື ສະຖານທີ່ສະເພາະ ປາສະຈາກການລົບກວນ ແລະ ມີສະພາບແວດລ້ອມທີ່ເປັນມິດຕໍ່ເດັກ.

ມາດຕາ 50 **ການນຸ່ງຖືໃນເວລາສືບສວນ-ສອບຖາມ ຫຼື ສຳພາດເດັກ**

ໃນການສືບສວນ-ສອບຖາມ, ການສຳພາດເດັກນັ້ນ ພະນັກງານທີ່ກ່ຽວຂ້ອງ ຕ້ອງນຸ່ງເຄື່ອງສຸພາບ ບໍ່ໃສ່ເຄື່ອງແບບ ແລະ ບໍ່ຖືອາວຸດ ຍົກເວັ້ນການສືບສວນ-ສອບຖາມ ຫຼື ສຳພາດກັບທີ່ ໃນກໍລະນີເຊີ່ງໜ້າ ຫຼື ຮີບດ່ວນ ແຕ່ເຈົ້າໜ້າທີ່ຄວນປົກປິດອາວຸດ ເພື່ອຫຼີກລ່ຽງຮູບການທີ່ເປັນການນາບຂູ່ເດັກ.

ມາດຕາ 51 **ການສືບສວນ-ສອບຖາມເດັກ**

ການສືບສວນ-ສອບຖາມເດັກ ທີ່ຖືກສົງໄສ, ຖືກຫາ, ເປັນຈຳເລີຍ ຕ້ອງໃຫ້ມີ ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງອື່ນ ເຂົ້າຮ່ວມນຳທຸກຄັ້ງ.

ການສືບສວນ-ສອບຖາມເດັກນັ້ນ ຕ້ອງໃຊ້ຄຳຖາມທີ່ເຂົ້າໃຈງ່າຍ, ມີລັກສະນະເປັນກັນເອງ ໂດຍບໍ່ໃຫ້ເດັກເກີດຄວາມຢ້ານກົວ, ຫຼີກເວັ້ນ ຄຳຖາມແບບກົດດັນ, ແບບຊີ້ນຳ ຫຼື ຄຳຖາມປິດ, ຊັກຈູງ ແລະ ບໍ່ໃຫ້ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ.

ການສືບສວນ-ສອບຖາມເດັກແຕ່ລະຄັ້ງ ໃຫ້ມີການພັກຜ່ອນ ແຕ່ໃຊ້ເວລາລວມບໍ່ໃຫ້ເກີນເກົ້າສິບນາທີ, ຖ້າເດັກທີ່ຖືກສອບຖາມ ເປັນເພດຍິງ ຕ້ອງໃຫ້ເພດດຽວກັນເປັນຜູ້ສອບຖາມ ຫຼື ໃຫ້ມີເພດຍິງເຂົ້າຮ່ວມນຳ.

ໃນກໍລະນີເດັກຫຼາຍຄົນຮ່ວມກັນກະທຳຜິດນັ້ນ ໃຫ້ແຍກກັນສອບຖາມເທື່ອລະຄົນ ຖ້າວ່າຄຳໃຫ້ການຫາກບໍ່ກົງກັນ ກໍສາມາດສອບຖາມຊ້ອງໜ້າ.

ມາດຕາ 52 **ການສຳພາດເດັກ**

ການສຳພາດ ເດັກຖືກເຄາະຮ້າຍ ແລະ ເດັກເປັນພະຍານ ຕ້ອງດຳເນີນໂດຍພະນັກງານຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ຂອງໜ່ວຍງານໄອຍະການເດັກ ດ້ວຍການປະສານສົມທົບກັບນັກສັງຄົມສົງເຄາະ, ນັກຈິດຕະວິທະຍາ ຫຼື ຕາໜ່າງປົກປ້ອງ ແລະ ຊ່ວຍເຫຼືອເດັກ ຫຼື ຜູ້ຕາງໜ້າອົງການຈັດຕັ້ງທີ່ກ່ຽວຂ້ອງ.

ໃນການສຳພາດ ເດັກຖືກເຄາະຮ້າຍ ແລະ ເດັກເປັນພະຍານ ຜູ້ສຳພາດ ຕ້ອງປະຕິບັດດັ່ງນີ້:

1. ໃຫ້ມີພໍ່ແມ່, ຜູ້ປົກຄອງ, ຜູ້ປົກປ້ອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເຂົ້າຮ່ວມນຳ;
2. ໃຊ້ວິທີການທີ່ນິ້ມນວນ ແລະ ເປັນມິດຕໍ່ເດັກ;
3. ໃຊ້ຄຳເວົ້າທີ່ເຂົ້າໃຈງ່າຍ ເໝາະສົມກັບອາຍຸ ແລະ ຄວາມສາມາດຂອງເດັກ ໃນການຈຳແນກຄວາມຖືກ-ຄວາມຜິດ;
4. ຕ້ອງດຳເນີນໃນສະຖານທີ່ເໝາະສົມ.

ມາດຕາ 53 **ການເອົາຄຳໃຫ້ການ ຫຼື ການສຳພາດເດັກພິການ**

ໃນການເອົາຄຳໃຫ້ການ ຫຼື ການສຳພາດເດັກພິການ ເປັນຕົ້ນ ເດັກຫູໜວກ, ຕາບອດ, ປາກກືກ, ປັນຍາອ່ອນ, ເສັຍຈິດ ຊຶ່ງບໍ່ສາມາດປະຕິບັດສິດຂອງຕົນໄດ້ນັ້ນ ຕ້ອງໃຫ້ມີການເຂົ້າຮ່ວມຂອງ ພໍ່ແມ່, ຜູ້ປົກຄອງ, ຄູ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ແລະ ໃຫ້ມີສະຖານທີ່ ທີ່ເໝາະສົມ.

ມາດຕາ 54 **ການສືບສວນ-ສອບຖາມ ຫຼື ສຳພາດເດັກທີ່ບໍ່ມີຜູ້ປົກຄອງເຂົ້າຮ່ວມ**

ໃນການສືບສວນ-ສອບຖາມ ຫຼື ສຳພາດເດັກທີ່ບໍ່ມີຜູ້ປົກຄອງ ເຂົ້າຮ່ວມ ເຊັ່ນ ເດັກຖືກປະລະ, ບໍ່ສາມາດຕິດຕໍ່ຫາພໍ່ແມ່ ຫຼື ຜູ້ປົກຄອງໄດ້ ຫຼື ບຸກຄົນດັ່ງກ່າວຢູ່ຫ່າງໄກ ບໍ່ສາມາດເຂົ້າຮ່ວມໄດ້ ຫຼື ປະຕິເສດການເຂົ້າຮ່ວມນັ້ນ ພະນັກງານທີ່ກ່ຽວຂ້ອງ ຕ້ອງພົວພັນກັບຍາດໃກ້ຊິດຂອງເດັກ ຫຼື ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ແຕ່ງຕັ້ງຜູ້ປົກປ້ອງ ຫຼື ເຊີນຜູ້ຕາງໜ້າຕາໜ່າງປົກປ້ອງ ແລະ ຊ່ວຍເຫຼືອເດັກ ເຂົ້າຮ່ວມນຳ.

ມາດຕາ 55 **ບົດບັນທຶກການສືບສວນ-ສອບຖາມ ຫຼື ສຳພາດເດັກ**

ໃນການ ສືບສວນ-ສອບຖາມ ຫຼື ສຳພາດເດັກ ຕ້ອງເຮັດບົດບັນທຶກຄຳໃຫ້ການຂອງເດັກ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ວັນທີ, ເດືອນ, ປີ, ສະຖານທີ່, ເວລາ ເລີ່ມຕົ້ນ ແລະ ສິ້ນສຸດການສືບສວນ-ສອບຖາມ ຫຼື ການສຳພາດ;
2. ຊື່ ແລະ ນາມສະກຸນ, ຕຳແໜ່ງ, ໜ້າທີ່, ບ່ອນປະຈຳການຂອງເຈົ້າໜ້າທີ່ສືບສວນ-ສອບຖາມ ຫຼື ສຳພາດ ແລະ ຜູ້ບັນທຶກ; ໃນກໍລະນີມີເຈົ້າໜ້າທີ່ເຂົ້າຮ່ວມຫຼາຍຄົນ ກໍຕ້ອງບອກຊື່ ແລະ ນາມສະກຸນ, ຕຳແໜ່ງ, ໜ້າທີ່, ບ່ອນປະຈຳການຂອງແຕ່ລະຄົນ;
3. ຊື່ ແລະ ນາມສະກຸນ, ອາຍຸ, ສັນຊາດ, ອາຊີບ, ທີ່ຢູ່ ຂອງຜູ້ເຂົ້າຮ່ວມ ໃນການເອົາຄຳໃຫ້ການແຕ່ລະຄົນ, ສຳລັບເດັກ ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ເປັນຈຳເລີຍນັ້ນ ໃຫ້ເອົາຊີວະປະຫວັດລະອຽດຂອງຜູ້ກ່ຽວ;
4. ຂໍ້ກ່າວຫາ;
5. ເນື້ອໃນຂອງການ ສືບສວນ-ສອບຖາມ ຫຼື ສຳພາດເດັກ.

ພາຍຫຼັງທີ່ໄດ້ເຮັດບົດບັນທຶກແລ້ວ ຕ້ອງໃຫ້ຜູ້ໃຫ້ການອ່ານເອງ ຫຼື ໃຫ້ທະນາຍຄວາມ ຫຼື ຜູ້ປົກປ້ອງຂອງຜູ້ກ່ຽວ ອ່ານ ຫຼື ອ່ານໃຫ້ຜູ້ກ່ຽວຟັງ ພ້ອມທັງຖາມຄຳເຫັນຂອງຜູ້ກ່ຽວ ແລ້ວຈຶ່ງໃຫ້ລົງລາຍເຊັນ ແລະ/ຫຼື ແປະໂປ້ມືໃສ່.

ຖ້າຫາກມີການຂີດຂ້າ ຫຼື ເພີ່ມເຕີມ ຂໍ້ຄວາມໃນບົດບັນທຶກນັ້ນ ກໍໃຫ້ລົງລາຍເຊັນຢັ້ງຢືນ, ສ່ວນຜູ້ໃຫ້ການນັ້ນ ຍັງຕ້ອງແປະໂປ້ມືໃສ່ຕໍ່ໜ້າແຖວບ່ອນມີການຂີດຂ້າ ຫຼື ເພີ່ມເຕີມອີກ.

ຖ້າບົດບັນທຶກນັ້ນ ຫາກມີຫຼາຍກວ່າໜຶ່ງໜ້າເຈ້ຍ ຕ້ອງໃຫ້ຜູ້ໃຫ້ການ ຫຼື ທະນາຍຄວາມ ຫຼື ຜູ້ປົກປ້ອງ ເຊັນ ແລະ/ຫຼື ແປະໂປ້ມື ຢັ້ງຢືນໄວ້ໃນແຕ່ລະໜ້າເຈ້ຍ.

ໃນກໍລະນີຜູ້ໃຫ້ການຫາກບໍ່ຍອມລົງລາຍເຊັນ ແລະ/ຫຼື ແປະໂປ້ມື ກໍໃຫ້ໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກ ແລ້ວລົງລາຍເຊັນຢັ້ງຢືນໄວ້.

ບົດບັນທຶກຄໍາໃຫ້ການດັ່ງກ່າວ ໃຫ້ເຮັດເປັນ ສາມສະບັບ ແລ້ວມອບສະບັບໜຶ່ງ ໃຫ້ຜູ້ໃຫ້ການ, ອີກສະບັບໜຶ່ງປະກອບໃສ່ສໍານວນຄະດີ ສ່ວນອີກໜຶ່ງສະບັບ ໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງເກັບມ້ຽນ.

## ມາດຕາ 56 **ຜົນຂອງການສອບຖາມ ຫຼື ສໍາພາດເດັກ**

ການສອບຖາມ ຫຼື ສໍາພາດເດັກ ທີ່ມີອາຍຸແຕ່ ສິບຫ້າປີ ຫາ ຕໍ່າກວ່າ ສິບແປດປີ ຈະສາມາດໃຊ້ເປັນຫຼັກຖານໄດ້ ກໍຕໍ່ເມື່ອການພິຈາລະນາຂອງອົງການທີ່ມີສິດໃນການດໍາເນີນຄະດີ ມີຄວາມໝັ້ນໃຈວ່າເດັກນັ້ນ ມີຄວາມອາດສາມາດເຂົ້າໃຈຄໍາຖາມຂອງພະນັກງານທີ່ກ່ຽວຂ້ອງ ແລະ ຮູ້ໄດ້ເຖິງຜົນສະທ້ອນຂອງຄໍາຕອບຕົນ ຕາມຄວາມເປັນຈິງ. ໃນກໍລະນີ ບໍ່ມີຄວາມໝັ້ນໃຈວ່າເດັກ ຈະສາມາດເຂົ້າໃຈໄດ້ຢ່າງເລິກເຊິ່ງກັບຄໍາຖາມ ຫຼື ຜົນສະທ້ອນຂອງຄໍາຕອບນັ້ນ ກໍສາມາດແຕ່ງຕັ້ງຜູ້ຊ່ຽວຊານເພື່ອທໍາການພິສູດສະພາບຈິດ ແລະ ຄວາມສາມາດຂອງເດັກ ໃນການຈໍາແນກຄວາມຖືກ-ຄວາມຜິດ.

ການສືບສວນ-ສອບຖາມ ຫຼື ສໍາພາດເດັກ ທີ່ມີອາຍຸຕໍ່າກວ່າ ສິບຫ້າປີ ໃຫ້ຖືເປັນຂໍ້ມູນເທົ່ານັ້ນ.

## ມາດຕາ 57 **ການສະຫຼຸບຄະດີ**

ພາຍຫຼັງ ໄດ້ເກັບກໍາຂໍ້ມູນຫຼັກຖານ ແລະ ເອົາຄໍາໃຫ້ການຄົບຖ້ວນແລ້ວ ເຈົ້າໜ້າທີ່ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ຂອງໜ່ວຍງານໄອຍະການເດັກ ຕ້ອງເຮັດບົດສະຫຼຸບຄະດີຢ່າງເປັນລາຍລັກອັກສອນ ໂດຍສັງລວມເອົາເຫດການຂອງຄະດີ, ປະເດັນໃນຄະດີ, ຫຼັກຖານໃນຄະດີ ແລ້ວປະກອບເປັນສໍານວນຄະດີ ເພື່ອດໍາເນີນຕາມຂັ້ນຕອນຂອງກົດໝາຍ.

## ມາດຕາ 58 **ການແຍກຄະດີ**

ພາຍຫຼັງການສືບສວນ-ສອບຖາມ ຫຼື ສໍາພາດສິ້ນສຸດແລ້ວ ຖ້າຫາກເຫັນວ່າຄະດີນັ້ນ ມີເດັກ ແລະ ຜູ້ໃຫຍ່ຮ່ວມກັນກະທໍາຜິດ ໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍະການເດັກ ຕ້ອງແຍກອອກເປັນສອງສໍານວນ ລະຫວ່າງ ຄະດີຜູ້ໃຫຍ່ ແລະ ຄະດີເດັກ. ສ່ວນຄະດີຜູ້ໃຫຍ່ຕ້ອງສົ່ງໃຫ້ອົງການທີ່ມີສິດກ່ຽວຂ້ອງດໍາເນີນຕາມລະບຽບກົດໝາຍ. ຖ້າວ່າຜູ້ຖືກເຄາະຮ້າຍ ຫຼື ເປັນພະຍານ ຫາກແມ່ນເດັກ ອົງການທີ່ດໍາເນີນຄະດີ ຕ້ອງປະຕິບັດຕໍ່ເດັກຕາມກົດໝາຍສະບັບນີ້.

ຄຳໃຫ້ການຂອງເດັກທີ່ຖືກເຄາະຮ້າຍ ຫຼື ເປັນພະຍານ ໃນຄະດີເດັກ ສາມາດນຳໃຊ້ເຂົ້າໃນການພິຈາລະນາຄະດີອື່ນໄດ້ ຖ້າບໍ່ຈຳເປັນ ບໍ່ໃຫ້ນຳເດັກມາສືບສວນ-ສອບຖາມ ຫຼື ສຳພາດຄືນໃນປະເດັນດຽວກັນ.

**ມາດຕາ 59 ການໂຮມຄະດີ**

ໃນກໍລະນີເດັກຫຼາຍຄົນຮ່ວມກັນກະທຳຜິດອັນດຽວ ຫຼື ມີຜູ້ຖືກເສຍຫາຍຫຼາຍຄົນ ຈາກການກະທຳຜິດຂອງເດັກຜູ້ດຽວ ຖ້າມີການດຳເນີນຄະດີຢູ່ຫຼາຍບ່ອນ ໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ໜ່ວຍງານໄອຍະການເດັກ ຕ້ອງໂຮມເອົາຄະດີນັ້ນເຂົ້າເປັນສຳນວນດຽວກັນ ເພື່ອດຳເນີນ ຕາມລະບຽບກົດໝາຍ.

**ມາດຕາ 60 ການນຳໃຊ້ວິທີການສືບສວນ-ສອບຖາມ ແລະ ການສຳພາດເດັກ**

ໃນການດຳເນີນຄະດີເດັກ ນອກຈາກທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ແລ້ວ ສາມາດນຳໃຊ້ວິທີການສືບສວນ-ສອບສວນ, ມາດຕະການຕ່າງໆ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ການນຳໃຊ້ມາດຕະການສະກັດກັ້ນຕໍ່ເດັກ

**ມາດຕາ 61 ມາດຕະການສະກັດກັ້ນຕໍ່ເດັກ**

ມາດຕະການສະກັດກັ້ນຕໍ່ເດັກ ມີ ດັ່ງນີ້:

1. ການພາຕົວ;
2. ການຄຸມຕົວຢູ່ກັບທີ່;
3. ການກັກຕົວ;
4. ການຈັບຕົວ;
5. ການກັກຂັງພາງ;
6. ການປ່ອຍຕົວພາງ;
7. ການປ່ອຍຕົວ;
8. ການສຶກສາອົບຮົມເດັກ.

ໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ, ສານເດັກ ແລະ ຄະນະສານເດັກ ຈະກັກຕົວ, ຈັບຕົວ ແລະ ກັກຂັງພາງໄດ້ ແຕ່ໃຫ້ເປັນມາດຕະການສຸດທ້າຍ.

### ມາດຕາ 62 ການພາຕົວ

ໃນກໍລະນີ ເດັກທີ່ຖືກສົງໄສ, ຖືກຫາ ທີ່ບໍ່ໄດ້ຖືກກັກຂັງພາງ, ເດັກເປັນພະຍານ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນ ຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການປະຊາຊົນ, ສານເດັກ ຫຼື ຄະນະສານເດັກ ຈະອອກຄໍາສັ່ງພາຕົວ, ສໍາລັບການພາຕົວເດັກນັ້ນ ຕ້ອງໃຫ້ ພໍ່, ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ ເຂົ້າຮ່ວມນໍາ. ຄໍາສັ່ງພາຕົວ ໃຫ້ປະຕິບັດໄດ້ແຕ່ເວລາ ຫົກໂມງ ຫາສິບແປດໂມງ ເວັ້ນເສຍແຕ່ ໃນກໍລະນີເດັກທີ່ຖືກສົງໄສ ຫຼື ຖືກຫາ ຈະເອົາຕົວຫຼົບໜີ.

ກ່ອນຈະພາຕົວນັ້ນ ຕ້ອງອ່ານຄໍາສັ່ງ ໃຫ້ພໍ່, ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ ແລະ ຜູ້ຖືກພາຕົວຊາບ.

### ມາດຕາ 63 ການຄຸມຕົວຢູ່ກັບທີ່

ເພື່ອຮັບປະກັນໃຫ້ແກ່ການດໍາເນີນຄະດີນັ້ນ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານເດັກ ຫຼື ຄະນະສານເດັກ ສາມາດອອກຄໍາສັ່ງຄຸມຕົວເດັກກະທໍາຜິດຢູ່ກັບທີ່ໂດຍບໍ່ອະນຸຍາດໃຫ້ເດັກເຂົ້າ ຫຼື ອອກຈາກພື້ນທີ່ໃດໜຶ່ງ ເວັ້ນເສຍແຕ່ກໍລະນີ ມີຄໍາຮ້ອງ ຫຼື ຄໍາສະເໜີຂອງ ພໍ່, ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ ຂໍຮັບປະກັນດ້ວຍເຫດຜົນທີ່ເປັນໜ້າເຊື່ອຖືໄດ້.

ຄໍາສັ່ງຄຸມຕົວຢູ່ກັບທີ່ ຕ້ອງແຈ້ງໃຫ້ພໍ່, ແມ່ ຫຼື ຜູ້ປົກຄອງ ແລະ ສົ່ງໃຫ້ອົງການປົກຄອງບ້ານບ່ອນເດັກອາໄສຢູ່ ພ້ອມທັງມອບໃຫ້ອົງການປົກຄອງບ້ານນັ້ນ ເປັນຜູ້ຄຸ້ມຄອງ ແລະ ຕິດຕາມຈົນກວ່າຄະດີຈະສິ້ນສຸດ ຫຼື ມີການລຶບລ້າງຄໍາສັ່ງດັ່ງກ່າວ.

ໃນກໍລະນີທີ່ເດັກນັ້ນ ຫາກໄດ້ລະເມີດຄໍາສັ່ງຄຸມຕົວຢູ່ກັບທີ່ ກໍອາດຈະນໍາໃຊ້ມາດຕະການສະກັດກັ້ນອື່ນໃສ່ຜູ້ກ່ຽວ.

### ມາດຕາ 64 ການກັກຕົວ

ໃນກໍລະນີມີຄວາມຈໍາເປັນ ເດັກກໍຈະຖືກກັກຕົວ ເພື່ອທໍາການສືບສວນ-ສອບສວນ ໂດຍໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງອອກຄໍາສັ່ງກັກຕົວ ແຕ່ການກັກຕົວບໍ່ໃຫ້ເກີນ ຊາວສີ່ຊົ່ວໂມງ ແລະ ຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນ.

ໃນກໍລະນີທີ່ໄດ້ກັກຕົວເດັກນັ້ນ ເຈົ້າໜ້າທີ່ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ຂອງໜ່ວຍງານໄອຍະການເດັກ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ແຈ້ງໃຫ້ເດັກຊາບກ່ຽວກັບເຫດຜົນຂອງການກັກຕົວ ແລະ ແຈ້ງໃຫ້ເດັກຮູ້ກ່ຽວກັບສິດຂອງຜູ້ກ່ຽວຕາມກົດໝາຍ;

2. ແຈ້ງໃຫ້ພໍ່, ແມ່, ຜູ້ປົກຄອງ ຫຼື ອົງການປົກຄອງບ້ານທີ່ເດັກອາໄສຢູ່ ໂດຍທັນທີພາຍຫຼັງໄດ້ກັກຕົວ;

3. ບໍ່ໃຊ້ຄວາມຮຸນແຮງທຸກຮູບແບບ ແລະ ບໍ່ນາບຂູ່ດ້ວຍອາວຸດ ຫຼື ຄຳເວົ້າທີ່ແຕະຕ້ອງເຖິງກຽດສັກສີ ແລະ ຈິດໃຈຂອງເດັກ;

4. ນຳສົ່ງເດັກໄປຫາແພດທີ່ກ່ຽວຂ້ອງ ເພື່ອກວດສະພາບຮ່າງກາຍ ແລະ ຈິດໃຈຂອງເດັກຢ່າງລະອຽດ. ຜົນຂອງການກວດ ຕ້ອງຮັກສາໄວ້ເປັນຄວາມລັບ ເວັ້ນເສຍແຕ່ມີຄຳສັ່ງຈາກອົງການທີ່ມີສິດ ໜ້າທີ່ກ່ຽວຂ້ອງເທົ່ານັ້ນ;

5. ຮັບປະກັນຄວາມປອດໄພແກ່ເດັກໃນເວລາຢູ່ໃນສະຖານທີ່ກັກຕົວ;

6. ມີສະຖານທີ່ກັກຕົວເດັກສະເພາະ ໂດຍໃຫ້ແຍກເດັກທີ່ເປັນເພດຕ່າງກັນ ຫຼື ແຍກເດັກອອກຈາກຫ້ອງກັກຕົວຜູ້ໃຫຍ່ ແລະ ນັກໂທດ;

7. ເຮັດບົດບັນທຶກ ການກັກຕົວ ແລະ ເຄື່ອງຕິດຕົວຂອງເດັກເປັນ ສອງສະບັບ ແລ້ວມອບໃຫ້ຜູ້ກ່ຽວສະບັບໜຶ່ງ, ອີກໜຶ່ງສະບັບເກັບໄວ້ໃນສຳນວນ. ສຳລັບເຄື່ອງຕິດຕົວເດັກນັ້ນ ເຈົ້າໜ້າທີ່ອາດຈະຮັກສາໄວ້ ຫຼື ມອບຄືນໃຫ້ພໍ່ແມ່ ຫຼື ຜູ້ປົກຄອງເດັກ.

**ມາດຕາ 65 ການຈັບຕົວ**

ການຈັບຕົວເດັກ ຕ້ອງມີຄຳສັ່ງເປັນລາຍລັກອັກສອນ ຈາກຫົວໜ້າອົງການໄອຍະການປະຊາຊົນ ຫຼື ສານເດັກ ຫຼື ຄະນະສານເດັກ ເວັ້ນເສຍແຕ່ການຈັບຕົວໃນກໍລະນີທີ່ເປັນການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ.

ຫົວໜ້າອົງການໄອຍະການປະຊາຊົນ ແລະ ສານເດັກ ຫຼື ຄະນະສານເດັກ ຈະອອກຄຳສັ່ງຈັບຕົວເດັກ ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຄຳສັ່ງເປີດການສືບສວນ-ສອບສວນ;

2. ມີອົງປະກອບການກະທຳຜິດທາງອາຍາ, ເປັນການກະທຳຜິດທາງອາຍາທີ່ຮ້າຍແຮງ ແລະ ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ ສາມປີ ຂຶ້ນໄປ ຫຼື ການກະທຳຜິດເປັນອາຈິນ ຫຼື ບໍ່ເຂັດຫຼາບ;

3. ມີຫຼັກຖານຮັດກຸມ ໜັກແໜ້ນ ວ່າເດັກນັ້ນເປັນຜູ້ກະທຳຜິດ;

4. ມີເຫດຜົນທີ່ເຊື່ອໄດ້ວ່າເດັກອາດຈະເອົາຕົວຫຼົບໜີ, ທຳລາຍຫຼັກຖານ ຫຼື ກະທຳຜິດໃໝ່ອີກ, ທຳຮ້າຍ ຜູ້ຖືກເສຍຫາຍ, ພະຍານ ຫຼື ຖືກຜູ້ອື່ນທຳຮ້າຍ.

ໃນການຈັບຕົວເດັກນັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້.

ໃນການຈັບຕົວເດັກ ເຈົ້າໜ້າທີ່ ຕ້ອງອ່ານຄຳສັ່ງຈັບຕົວ ພ້ອມທັງແຈ້ງຂໍ້ກ່າວຫາ, ສິດ ແລະ ພັນທະໃຫ້ຜູ້ຖືກຈັບຕົວ ແລະ ພໍ່, ແມ່, ຜູ້ປົກຄອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ.

ພາຍຫຼັງໄດ້ຈັບຕົວແລ້ວ ເຈົ້າໜ້າທີ່ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ ຫຼື ຂອງໜ່ວຍງານໄອຍະການເດັກ ຕ້ອງສືບສວນ-ສອບຖາມເດັກໃນທັນໃດ ແລະ ຕ້ອງລາຍງານເປັນລາຍລັກ

ອັກສອນ ໃຫ້ຫົວໜ້າອົງການໄອຍະການປະຊາຊົນ ພາຍໃນກຳນົດ ຊາວສີ່ຊົ່ວໂມງ ເພື່ອພິຈາລະນາລົງຄຳເຫັນວ່າ ຈະປ່ອຍຕົວ ຫຼື ຈະກັກຂັງພາງ.

**ມາດຕາ 66 ການກັກຂັງພາງ**

ການກັກຂັງພາງເດັກ ແມ່ນ ການກັກຂັງຊົ່ວຄາວ ກ່ອນຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ.

ໃນການກັກຂັງພາງເດັກ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງມີຄຳສັ່ງເປັນລາຍລັກອັກສອນ ຈາກຫົວໜ້າອົງການໄອຍະການປະຊາຊົນ, ສານເດັກ ຫຼື ຄະນະສານເດັກ ແລະ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້;

2. ຕ້ອງອະນຸຍາດໃຫ້ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ, ໝູ່ເພື່ອນ ແລະ ຜູ້ປົກປ້ອງເຂົ້າຢ້ຽມຢາມ;

3. ຕ້ອງແຍກເດັກ ທີ່ເປັນເພດຕ່າງກັນ ຫຼື ແຍກເດັກ ອອກຈາກ ຫ້ອງກັກຕົວຜູ້ໃຫຍ່ ແລະ ນັກໂທດ.

ກຳນົດເວລາຂອງການກັກຂັງພາງເດັກ ບໍ່ໃຫ້ເກີນໜຶ່ງເດືອນ ນັບແຕ່ວັນອອກຄຳສັ່ງກັກຂັງພາງເປັນຕົ້ນໄປ. ຖ້າຫາກເຫັນວ່າມີຄວາມຈຳເປັນ ຕ້ອງໄດ້ສືບສວນ-ສອບຖາມຕໍ່ນັ້ນ ຫົວໜ້າອົງການໄອຍະການປະຊາຊົນ, ສານເດັກ ຫຼື ຄະນະສານເດັກ ອາດຈະຕໍ່ກຳນົດເວລາການກັກຂັງພາງໄດ້ອີກເທື່ອລະໜຶ່ງເດືອນ ແຕ່ສູງສຸດບໍ່ໃຫ້ເກີນ ສີ່ເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ ບໍ່ໃຫ້ເກີນ ແປດເດືອນ ສຳລັບການກະທຳຜິດໃນສະຖານຄະຣຸໂທດ.

ໃນໄລຍະກັກຂັງພາງນັ້ນ ບໍ່ອະນຸຍາດໃຫ້ນຳເດັກ ອອກໄປອອກແຮງງານ ຫຼື ອອກຈາກສະຖານທີ່ກັກຂັງ ເວັ້ນເສຍແຕ່ກໍລະນີທີ່ຈຳເປັນ.

**ມາດຕາ 67 ການປ່ອຍຕົວພາງ**

ການປ່ອຍຕົວພາງເດັກ ໃຫ້ຖືເປັນບູລິມະສິດໃນຂະບວນການດຳເນີນຄະດີເດັກ ໂດຍສະເພາະ ເມື່ອເງື່ອນໄຂຂອງການກັກຂັງພາງຫາກໄດ້ຕົກໄປ. ການປ່ອຍຕົວພາງ ຈະດຳເນີນຕາມຄຳຮ້ອງຂໍຂອງພໍ່, ແມ່, ຜູ້ປົກຄອງ ຫຼື ຍາດໃກ້ຊິດ ຫຼື ຜູ້ປົກປ້ອງ ຫຼື ໂດຍໜ້າທີ່ຂອງອົງການໄອຍະການປະຊາຊົນ, ສານເດັກ ຫຼື ຄະນະສານເດັກ.

ໃນການປ່ອຍຕົວພາງເດັກ ຕາມຄຳຮ້ອງຂໍຂອງພໍ່, ແມ່, ຜູ້ປົກຄອງ ຫຼື ຍາດໃກ້ຊິດ ຫຼື ຜູ້ປົກປ້ອງນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງໃຫ້ຄຳເຫັນຕໍ່ຄຳຮ້ອງຂໍປ່ອຍຕົວພາງນັ້ນ ພາຍໃນກຳນົດເວລາຊາວສີ່ຊົ່ວໂມງ ພາຍຫຼັງທີ່ໄດ້ຮັບຄຳຮ້ອງເປັນຕົ້ນໄປ ແລ້ວສົ່ງຄຳຮ້ອງດັ່ງກ່າວ ພ້ອມດ້ວຍຄຳເຫັນຂອງຕົນ ໃຫ້ຫົວໜ້າອົງການໄອຍະການປະຊາຊົນ ພິຈາລະນາພາຍໃນກຳນົດ ຊາວສີ່ຊົ່ວໂມງ.

ຖ້າວ່າຫົວໜ້າອົງການໄອຍະການປະຊາຊົນ ຕົກລົງເຫັນດີໃຫ້ປ່ອຍຕົວເດັກແລ້ວ ກໍຕ້ອງປ່ອຍຕົວເດັກໂດຍທັນທີ.

ເດັກທີ່ຖືກປ່ອຍຕົວພາງ ຕ້ອງໃຫ້ພໍ່, ແມ່, ຜູ້ປົກຄອງ ຫຼື ຍາດໃກ້ຊິດ ຫຼື ຜູ້ປົກປ້ອງ, ການຈັດຕັ້ງ ພ້ອມດ້ວຍອົງການປົກຄອງບ້ານທີ່ກ່ຽວຂ້ອງ ຕິດຕາມ ແລະ ສຶກສາອົບຮົມເດັກ.

ສໍາລັບການກະທໍາຜິດໃນສະຖານຄະຣຸໂທດ ຈະບໍ່ອະນຸຍາດໃຫ້ມີການປ່ອຍຕົວພາງເດັກ.

ການປ່ອຍຕົວພາງເດັກ ຖ້າບໍ່ຈໍາເປັນ ກໍບໍ່ໃຫ້ມີຊັບຄໍ້າປະກັນ.

**ມາດຕາ 68 ການປ່ອຍຕົວ**

ຫົວໜ້າອົງການໄອຍະການປະຊາຊົນ, ສານ ຫຼື ຄະນະສານເດັກ ມີສິດອອກຄໍາສັ່ງປ່ອຍຕົວເດັກ ໃນກໍລະນີ ດັ່ງນີ້:

1. ເດັກທີ່ຖືກຈັບຕົວ ມີອາຍຸຕໍ່າກວ່າ ສິບຫ້າປີ;

2. ເດັກທີ່ມີອາຍຸ ສິບຫ້າປີ ແຕ່ບໍ່ເຖິງ ສິບແປດປີ ທີ່ຖືກຈັບຕົວໂດຍບໍ່ມີຄໍາສັ່ງຂອງຫົວໜ້າອົງການໄອຍະການປະຊາຊົນ, ສານ ຫຼື ຄະນະສານເດັກ;

3. ການກະທໍາຜິດຕາມທີ່ໄດ້ຮັບການແກ້ໄຂທາງດ້ານບໍລິຫານແລ້ວ;

4. ກໍານົດເວລາຂອງການກັກຂັງພາງເດັກສິ້ນສຸດແລ້ວ ເຖິງວ່າຍັງບໍ່ສາມາດສະຫຼຸບການສືບສວນ-ສອບຖາມ ແລະ ປະກອບສໍານວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ກໍຕາມ;

5. ຄໍາຕັດສິນໃຫ້ເດັກພົ້ນໂທດ ຫຼື ພົ້ນຂໍ້ກ່າວຫາ ຫຼື ການປະຕິບັດໂທດຄົບຕາມຄໍາຕັດສິນຂອງສານແລ້ວ.

ກ່ອນການປ່ອຍຕົວເດັກນັ້ນ ຕ້ອງແຈ້ງໃຫ້ພໍ່, ແມ່, ຜູ້ປົກຄອງ ຫຼື ອົງການປົກຄອງບ້ານທີ່ຜູ້ກ່ຽວອາໄສຢູ່ໃນທັນໃດ ພ້ອມທັງສິ່ງເຄື່ອງຕິດຕົວຂອງເດັກຄືນຢ່າງຄົບຖ້ວນ ໂດຍໃຫ້ເຮັດບົດບັນທຶກມອບຮັບຢ່າງຖືກຕ້ອງ.

**ມາດຕາ 69 ການສຶກສາອົບຮົມເດັກ**

ພາຍຫຼັງ ມີການໄກ່ເກ່ຍ ຫຼື ມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງໄດ້ວາງມາດຕະການໃດໜຶ່ງຕໍ່ເດັກນັ້ນ ໃນການສຶກສາອົບຮົມເດັກກະທໍາຜິດ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ເດັກຮັບຮູ້, ສໍານຶກ ແລະ ຮູ້ສຶກວ່າການກະທໍາຂອງຕົນ ເປັນການກະທໍາທີ່ບໍ່ຖືກຕ້ອງ ແລະ ເປັນການລະເມີດກົດໝາຍ;

2. ໃຫ້ເດັກເຂົ້າໃຈ, ມີສະຕິເຄົາລົບ, ແລະ ປະຕິບັດລະບຽບກົດໝາຍ;

3. ຊ່ວຍແນະນໍາໃຫ້ເດັກເຫັນທາງອອກທີ່ຖືກຕ້ອງໃນການດໍາລົງຊີວິດໃນສັງຄົມ ຕາມສະພາບທີ່ເໝາະສົມກັບສະພາບຕົວຈິງຂອງຕົນ ແລະ ຄອບຄົວ;

4. ຊ່ວຍຊອກເງື່ອນໄຂໃຫ້ເດັກໄດ້ຮັບ ການຟື້ນຟູ, ການສຶກສາຂັ້ນພື້ນຖານ ຫຼື ຝຶກອົບຮົມວິຊາຊີບໃດໜຶ່ງ;

5. ຊ່ວຍເຫຼືອເດັກໃນການພັດທະນາຕົນເອງ ແລະ ໄດ້ຮັບສະຫວັດດີການຕາມຄວາມເໝາະສົມ;

6. ສຶກສາອົບຮົມດ້ວຍຮູບການອື່ນ.

## ພາກທີ VI
## ອົງການໄອຍະການປະຊາຊົນ

**ມາດຕາ 70 ອົງການໄອຍະການປະຊາຊົນ**

ເພື່ອຮັບປະກັນການປະຕິບັດສິດ ແລະ ໜ້າທີ່ຂອງຕົນ ອົງການໄອຍະການປະຊາຊົນສູງສຸດ ຕ້ອງສ້າງຕັ້ງໜ່ວຍງານໄອຍະການເດັກ ຢູ່ ອົງການໄອຍະການປະຊາຊົນແຂວງ, ນະຄອນ, ອົງການໄອຍະການປະຊາຊົນພາກ ແລະ ອົງການໄອຍະການປະຊາຊົນສູງສຸດ.

ໂຄງປະກອບ ການຈັດຕັ້ງ, ບຸກຄະລາກອນຂອງໜ່ວຍງານໄອຍະການເດັກ ແຕ່ລະຂັ້ນ ມີລະບຽບການສະເພາະ.

**ມາດຕາ 71 ສິດ ແລະ ໜ້າທີ່ຂອງໜ່ວຍງານໄອຍະການເດັກ**

ໜ່ວຍງານໄອຍະການເດັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີຂໍເປີດການສືບສວນ-ສອບສວນ ແລະ ສັ່ງຟ້ອງເດັກກະທຳຜິດ, ນຳໃຊ້ມາດຕະການ ເພື່ອບໍ່ໃຫ້ເດັກກະທຳຜິດ ຫຼຸດພົ້ນອອກຈາກການດຳເນີນຄະດີ;

2. ຕິດຕາມກວດກາ ການປະຕິບັດລະບຽບການຂອງການໄກ່ເກ່ຍ, ການສືບສວນ-ສອບຖາມ, ການສືບສວນ-ສອບສວນ ແລະ ການດຳເນີນຄະດີຢູ່ສານ;

3. ສະເໜີຂໍນຳໃຊ້ມາດຕະການໃດໜຶ່ງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;

4. ຕິດຕາມກວດກາຢ່າງເຂັ້ມງວດ ເພື່ອບໍ່ໃຫ້ລົງໂທດ ເດັກທີ່ບໍ່ໄດ້ກະທຳຜິດ;

5. ທວງເອົາສຳນວນຄະດີເດັກ, ເອກະສານ ແລະ ຂໍ້ມູນຕ່າງໆ ກ່ຽວກັບການກະທຳຜິດຈາກໜ່ວຍງານສືບສວນ-ສອບສວນຄະດີເດັກ ເພື່ອທຳການກວດກາ;

6. ໄກ່ເກ່ຍ ແລະ ວາງມາດຕະການໃສ່ເດັກ ຕາມກຳລະນີທີ່ໄດ້ກຳນົດໄວ້ໃນມາດຕາ 12 ແລະ 29 ຂອງກົດໝາຍສະບັບນີ້, ໄກ່ເກ່ຍຄ່າເສັຍຫາຍທາງແພ່ງ ໃນຄະດີເດັກກະທຳຜິດທາງອາຍາຢ່າງຮ້າຍແຮງ ແລະ ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ ສາມປີ ຂຶ້ນໄປ ຫຼື ການກະທຳຜິດບໍ່ເຂັດຫຼາບ ຫຼື ເປັນອາຈິນ;

7. ສົ່ງສຳນວນຄະດີຄືນໃຫ້ໜ່ວຍງານສືບສວນ-ສອບສວນຄະດີເດັກ ເພື່ອທຳການສືບສວນ-ສອບຖາມເພີ່ມເຕີມ;

8. ໄດ້ຮັບການບຳລຸງ ຫຼື ຍົກລະດັບວິຊາການ ກ່ຽວກັບການດຳເນີນຄະດີເດັກ;

9. ຕິດຕາມກວດກາການຈັດຕັ້ງປະຕິບັດມາດຕະການໃສ່ເດັກ, ຢູ່ນອກ ຫຼື ໃນສູນຝຶກອົບຮົມສຳລັບເດັກກະທຳຜິດ.

ນອກຈາກສິດ ແລະ ໜ້າທີ່ດັ່ງທີ່ກ່າວມາເທິງນີ້ແລ້ວ ໜ່ວຍງານໄອຍະການເດັກ ຍັງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 72 ການຕິດຕາມກວດກາ ການປະຕິບັດກົດໝາຍຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ**

ໃນການຕິດຕາມກວດກາການປະຕິບັດກົດຫມາຍ ຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ ໜ່ວຍງານໄອຍະການເດັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາ ການເຄົາລົບລະບຽບການດຳເນີນການສືບສວນ-ສອບສວນ;
2. ຕິດຕາມກວດກາ ເພື່ອບໍ່ໃຫ້ເດັກຖືກກັກຕົວ, ຈັບຕົວ ຫຼື ກັກຂັງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
3. ເຂົ້າຮ່ວມການສືບສວນ-ສອບສວນຄະດີເດັກ ແລະ ໃນກໍລະນີທີ່ຈຳເປັນ ຈະດຳເນີນການສືບສວນ-ສອບສວນດ້ວຍຕົນເອງກໍໄດ້;
4. ສະເໜີຫົວໜ້າອົງການໄອຍະການປະຊາຊົນ ລົບລ້າງຄຳສັ່ງ ຂອງຫົວໜ້າອົງການສືບສວນ-ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນ;
5. ສະເໜີອອກຄຳແນະນຳເປັນລາຍລັກອັກສອນ ກ່ຽວກັບການສືບສວນ-ສອບຖາມຄະດີເດັກ, ການຊອກຫາເດັກກະທຳຜິດ, ການຕີຄວາມໝາຍການກະທຳຜິດ, ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;
6. ປະຕິບັດ ຄຳສັ່ງ ພາຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ແລະ ອອກຄຳສັ່ງປ່ອຍຕົວພາງ ແລະ ປ່ອຍຕົວ;
7. ສະເໜີຕໍ່ກຳນົດເວລາການສືບສວນ-ສອບສວນ ແລະ ກຳນົດເວລາການກັກຂັງພາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
8. ສົ່ງສຳນວນຄະດີຄືນໃຫ້ໜ່ວຍງານສືບສວນ-ສອບສວນຄະດີເດັກ ພ້ອມດ້ວຍຄຳແນະນຳ ກ່ຽວກັບການສືບສວນ-ສອບຖາມເພີ່ມເຕີມ;
9. ສະເໜີອອກຄຳສັ່ງຢຸດເຊົາ ການສືບສວນ-ສອບຖາມຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ ທີ່ມີການລະເມີດກົດໝາຍ;
10. ສະເໜີອອກຄຳສັ່ງໂຈະການດຳເນີນຄະດີ ຫຼື ຊັດມ້ຽນຄະດີ ຕາມສາເຫດທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ;
11. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 73 ການຕິດຕາມກວດກາການດໍາເນີນຄະດີຢູ່ສານ

ການຕິດຕາມກວດກາການດໍາເນີນຄະດີຢູ່ສານ ໜ່ວຍງານໄອຍະການເດັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມ ໃນທີ່ປະຊຸມສານ ຂັ້ນຂອງຕົນ ເພື່ອກ່າວຟ້ອງ ແລະ ຖະແຫຼງ ພ້ອມທັງຕິດຕາມກວດກາການໄຕ່ສວນຄະດີໃນທີ່ປະຊຸມສານ;

2. ກວດກາ ຄວາມຖືກຕ້ອງ ຂອງຄໍາຕັດສິນ ຫຼື ຄໍາພິພາກສາ ຕາມການສັ່ງຟ້ອງ ຫຼື ການຖະແຫຼງຂອງຕົນ ລວມທັງການວາງໂທດ ແລະ ການນໍາໃຊ້ມາດຕາກົດໝາຍໃສ່ການກະທໍາຜິດ;

3. ສະເໜີຕໍ່ຫົວໜ້າອົງການໄອຍະການປະຊາຊົນ ເພື່ອສະເໜີຄັດຄ້ານ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ, ຄໍາພິພາກສາຄະດີເດັກ ຂອງສານຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ບໍ່ສອດຄ່ອງກັບກົດໝາຍ;

4. ສະເໜີ ຕໍ່ຫົວໜ້າອົງການໄອຍະການປະຊາຊົນ ເພື່ອຖອນຄໍາສະເໜີຄັດຄ້ານຂອງຕົນກ່ອນການພິຈາລະນາຕັດສິນ ຫຼື ພິພາກສາຂອງສານ ໃນກໍລະນີກວດກາຄືນແລ້ວເຫັນວ່າຄໍາຕົກລົງຂອງສານນັ້ນ ໄດ້ປະຕິບັດຖືກຕ້ອງຕາມກົດໝາຍແລ້ວ;

5. ສະເໜີ ຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອພິຈາລະນາການຮື້ຟື້ນຄະດີຕາມກົດໝາຍ ໃນກໍລະນີທີ່ໄດ້ພົບເຫັນຫຼັກຖານໃໝ່;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

### ມາດຕາ 74 ກໍານົດເວລາໃນການພິຈາລະນາຄະດີເດັກ

ໜ່ວຍງານໄອຍະການເດັກ ຕ້ອງຄົ້ນຄວ້າ ແລະ ພິຈາລະນາຄະດີເດັກ ພາຍໃນກໍານົດສິບວັນ ນັບແຕ່ວັນໄດ້ຮັບສໍານວນຄະດີເປັນຕົ້ນໄປ ແລະ ມີ ສິດຕົກລົງ ດັ່ງນີ້:

1. ສະເໜີສົ່ງສໍານວນຄະດີຄືນ ໃຫ້ໜ່ວຍງານສືບສວນ-ສອບສວນຄະດີເດັກ ພ້ອມດ້ວຍປະເດັນການສືບສວນ-ສອບຖາມເພີ່ມເຕີມ ຖ້າເຫັນວ່າການສືບສວນ-ສອບຖາມ ຍັງບໍ່ທັນຄົບຖ້ວນ;

2. ສະເໜີຂໍຄໍາສັ່ງໂຈະ ຫຼື ຊັດມ້ຽນຄະດີ ຖ້າເຫັນວ່າມີສາເຫດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 146 ແລະ 148 ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ;

3. ສະເໜີປ່ຽນແປງ, ເພີ່ມເຕີມ, ຍົກເລີກ ຫຼື ລຶບລ້າງ ມາດຕະການສະກັດກັ້ນຂອງຫົວໜ້າອົງການສືບສວນ-ສອບສວນ ຖ້າເຫັນວ່າບໍ່ສອດຄ່ອງກັບເຫດການຂອງຄະດີ ແລະ ກົດໝາຍ;

4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

### ມາດຕາ 75 ການສັ່ງຟ້ອງຂຶ້ນສານ

ການສັ່ງຟ້ອງເດັກທີ່ຖືກຫາຂຶ້ນສານ ແມ່ນ ການອອກຄໍາສັ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນ ຊຶ່ງຕັ້ງຂໍ້ກ່າວຫາໃສ່ເດັກ ເພື່ອໃຫ້ສານພິຈາລະນາຕັດສິນ.

ຄໍາສັ່ງຟ້ອງເດັກທີ່ຖືກຫາຂຶ້ນສານ ຕ້ອງມີເນື້ອໃນ ດັ່ງນີ້:

1. ວັນ, ເດືອນ, ປີ ແລະ ສະຖານທີ່ ອອກຄໍາສັ່ງຟ້ອງ;

2. ຊື່, ນາມສະກຸນ, ໜ້າທີ່ ແລະ ຕຳແໜ່ງ ພ້ອມທັງລາຍເຊັນຂອງຜູ້ອອກຄຳສັ່ງຟ້ອງ;

3. ຊື່ ແລະ ນາມສະກຸນ ຂອງຜູ້ຖືກຫາ, ວັນ ເດືອນ ປີເກີດ, ອາຍຸ, ສັນຊາດ, ເຜົ່າ, ອາຊີບ, ສຳມະໂນຄົວ ແລະ ທີ່ຢູ່;

4. ຂໍ້ກ່າວຫາ, ວັນ, ເດືອນ, ປີ ກັກຂັງ, ປ່ອຍຕົວພາງ, ສະຖານທີ່ກັກຂັງ, ມາດຕາ ກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

ໜ່ວຍງານໄອຍະການເດັກ ຕ້ອງແຈ້ງຄຳສັ່ງຟ້ອງ ໃຫ້ເດັກທີ່ຖືກຫາ ຫຼື ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງຜູ້ກ່ຽວ ແລ້ວໃຫ້ລົງລາຍເຊັນຮັບຮູ້ ພາຍໃນສາມວັນລັດຖະການ ກ່ອນການສົ່ງສຳ ນວນຄະດີໃຫ້ສານ. ໃນກໍລະນີທີ່ບໍ່ຍອມລົງລາຍເຊັນໃນຄຳສັ່ງຟ້ອງ ກໍໃຫ້ບັນທຶກໄວ້.

ໃນການສັ່ງຟ້ອງເດັກທີ່ຖືກຫາຂຶ້ນສານ ຕ້ອງສົ່ງສຳນວນຄະດີ ພ້ອມດ້ວຍຂອງກາງ ເພື່ອໃຫ້ ສານພິຈາລະນາຕາມກົດໝາຍ.

**ມາດຕາ 76 ຄຳຖະແຫຼງ**

ຄຳຖະແຫຼງ ແມ່ນ ຄຳເຫັນຂອງຫົວໜ້າອົງການໄອຍະການປະຊາຊົນ ທີ່ໄຈ້ແຍກການກະທຳ ຜິດຂອງເດັກທີ່ຖືກຫາຕໍ່ສານ ໂດຍຊີ້ໃຫ້ເຫັນສີ່ອົງປະກອບຂອງການກະທຳຜິດທາງອາຍາ ຄື ດ້ານ ວັດຖຸກຳ, ດ້ານພາວະວິໄສ, ດ້ານອັດຕະວິໄສ ແລະ ເຈົ້າກຳ; ສາເຫດທີ່ພາໃຫ້ຫຼຸດຜ່ອນຄວາມຮັບ ຜິດຊອບທາງອາຍາ ຫຼື ສາເຫດອື່ນທີ່ມີຄວາມສຳຄັນສຳລັບຄະດີ, ມາດຕາຂອງກົດໝາຍທີ່ກຳນົດໂທດ ທາງອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍອົງການໄອຍະການປະຊາ ຊົນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ເດັກທີ່ຖືກຫາ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງຜູ່ກ່ຽວ ມີສິດອ່ານ, ຈົດກ່າຍ ຫຼື ອັດ ສຳເນົາເອົາເນື້ອໃນຄຳຖະແຫຼງ.

**ມາດຕາ 77 ການສັ່ງຟ້ອງຂຶ້ນສານໂດຍກົງ**

ຄະດີເດັກທີ່ຕ້ອງສັ່ງຟ້ອງຂຶ້ນສານໂດຍກົງ ແມ່ນ ຄະດີທີ່ຫົວໜ້າອົງການໄອຍະການປະຊາ ຊົນ ສັ່ງຟ້ອງເດັກກະທຳຜິດ ຂຶ້ນສານໂດຍບໍ່ເປີດການສືບສວນ-ສອບສວນ. ການສັ່ງຟ້ອງຂຶ້ນສານ ໂດຍກົງ ຕ້ອງມີຫຼັກຖານຄົບຖ້ວນ ເປັນຕົ້ນ ການກະທຳຜິດເຊິ່ງໜ້າ ທີ່ບໍ່ເປັນອັນຕະລາຍຮ້າຍແຮງ ຕໍ່ສັງຄົມ ຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບຕໍ່າກວ່າ ສາມປີ ແຕ່ຄູ່ກໍລະນີບໍ່ຍິນຍອມໃຫ້ ໄກ່ເກ່ຍ ຫຼື ແກ້ໄຂທາງດ້ານບໍລິຫານ ຫຼື ການກະທຳຜິດບໍ່ເຂັດຫຼາບ ຫຼື ເປັນອາຈີນ ຊຶ່ງມີການຮັບ ສາລະພາບຂອງເດັກ

# ພາກທີ VII
# ການດຳເນີນຄະດີເດັກຂອງສານ
## ໝວດທີ 1
## ສານເດັກ ແລະ ຄະນະສານເດັກ

**ມາດຕາ 78 ສານເດັກ ແລະ ຄະນະສານເດັກ**

ສານເດັກ ຖືກສ້າງຕັ້ງຂຶ້ນຢູ່ແຂວງ, ນະຄອນ ຕາມການອະນຸມັດຂອງຄະນະປະຈຳສະພາແຫ່ງຊາດ, ຂຶ້ນກັບສານປະຊາຊົນສູງສຸດໂດຍກົງ ມີສິດພິຈາລະນາຄະດີເດັກເປັນຂັ້ນຕົ້ນ. ໃນກໍລະນີທີ່ບໍ່ທັນສາມາດ ສ້າງຕັ້ງສານເດັກໄດ້ນັ້ນ ໃຫ້ຄະນະສານເດັກຂອງສານປະຊາຊົນ ແຂວງ, ນະຄອນ ເປັນຜູ້ພິຈາລະນາ.

ຄະນະສານເດັກ ຢູ່ ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ ມີສິດພິຈາລະນາຄະດີເດັກ ເປັນຂັ້ນອຸທອນ ແລະ ຂັ້ນລົບລ້າງ.

**ມາດຕາ 79 ສິດອຳນາດໃນການພິຈາລະນາຄະດີຂອງສານ**

ສານເດັກ ມີສິດອຳນາດພິຈາລະນາຄະດີອາຍາ ແລະ ຄະດີແພ່ງກ່ຽວກັບເດັກ ເປັນຂັ້ນຕົ້ນ ແລະ ຊີ້ຂາດກ່ຽວກັບຄຳຕົກລົງຂອງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ, ຫ້ອງການຍຸຕິທຳເມືອງ, ເທດສະບານ, ໜ່ວຍງານສືບສວນ-ສອບສວນຄະດີເດັກ ແລະ ໜ່ວຍງານໄອຍະການເດັກ ທີ່ໄດ້ໄກ່ເກ່ຍແລ້ວ ແຕ່ບໍ່ສາມາດປະຕິບັດໄດ້.

ຄະນະສານເດັກຂອງສານປະຊາຊົນພາກ ມີສິດອຳນາດພິພາກສາຄະດີເດັກເປັນຂັ້ນອຸທອນ ແລະ ຄະນະສານເດັກ ຂອງສານປະຊາຊົນສູງສຸດ ມີສິດອຳນາດພິພາກສາຄະດີເດັກເປັນຂັ້ນລົບລ້າງ ແລະ ຂັ້ນຮື້ຟື້ນ.

ໃນກໍລະນີຈຳເປັນ ສານສາມາດຈັດຕັ້ງຄະນະສານເຄື່ອນທີ່ໄປພິຈາລະນາຕັດສິນ ຫຼື ພິພາກສາຄະດີເດັກຢູ່ສະຖານທີ່ໃດໜຶ່ງທີ່ເຫັນວ່າເໝາະສົມ.

**ມາດຕາ 80 ສິດ ແລະ ໜ້າທີ່ຂອງສານ**

ສານເດັກ ແລະ ຄະນະສານເດັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນຄະດີທາງແພ່ງ ແລະ ຄະດີອາຍາ ກ່ຽວກັບເດັກ;
2. ອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຄະດີເດັກ;
3. ນຳໃຊ້ວິທີ ການສືບສວນ-ສອບຖາມ, ການສຳພາດ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
4. ສຶກສາອົບຮົມ, ໄກ່ເກ່ຍກ່ຽວກັບບັນຫາທາງແພ່ງ ໃນຄະດີເດັກ;

5. ສິ່ງຄຳຕັດສິນ ຫຼື ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ພ້ອມດ້ວຍສຳນວນຄະດີໄປຍັງ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 81 ສິດອຳນາດຂອງສານຕາມພື້ນທີ່**

ສານບ່ອນທີ່ເດັກກະທຳຜິດ ຫຼື ບ່ອນທີ່ເດັກຢູ່ປະຈຳ ມີສິດອຳນາດພິຈາລະນາຄະດີເດັກ. ໃນກໍລະນີມີເດັກຫຼາຍຄົນຮ່ວມກັນກະທຳຜິດ ຫຼື ກະທຳຜິດຢູ່ຫຼາຍບ່ອນ ຊຶ່ງເດັກດັ່ງກ່າວ ມີທີ່ຢູ່ຕ່າງກັນ ກໍໃຫ້ສານບ່ອນເດັກກະທຳຜິດສຸດທ້າຍ ເປັນຜູ້ພິຈາລະນາຕັດສິນ.

**ມາດຕາ 82 ການຂັດແຍ່ງ ກ່ຽວກັບສິດອຳນາດສານ**

ເມື່ອມີການຂັດແຍ່ງ ກ່ຽວກັບສິດອຳນາດ ໃນການພິຈາລະນາຄະດີ ລະຫວ່າງສານເດັກດ້ວຍກັນ ວ່າສານໃດມີສິດອຳນາດ ຫຼື ບໍ່ມີສິດອຳນາດພິຈາລະນາຄະດີນັ້ນ ໃຫ້ສານບ່ອນໄດ້ຮັບຄຳຮ້ອງຟ້ອງ ສະເໜີຂຶ້ນໄປຍັງສານປະຊາຊົນສູງສຸດ ເພື່ອພິຈາລະນາອອກຄຳຊີ້ຂາດ ກ່ຽວກັບສິດອຳນາດດັ່ງກ່າວ.

**ມາດຕາ 83 ລະບຽບການພິຈາລະນາຂອງສານ**

ໃນການພິຈາລະນາຄະດີເດັກ ສານ ຕ້ອງປະຕິບັດຕາມລະບຽບການ ດັ່ງນີ້:

1. ໃຫ້ມີຫ້ອງປະຊຸມສານສະເພາະ;

2. ໃຫ້ຄະນະສານຕັດສິນ ນຸ່ງເຄື່ອງສຸພາບ ບໍ່ໃຫ້ນຸ່ງຊຸດປະຊຸມສານທົ່ວໄປ;

3. ໃຫ້ເດັກກະທຳຜິດທີ່ເຂົ້າຮ່ວມ ມີສິດອອກຄຳເຫັນ ຊຶ່ງຕ້ອງໄດ້ຮັບການພິຈາລະນາບົນພື້ນຖານການຊັ່ງຊາຕາມອາຍຸ ແລະ ຄວາມສາມາດຂອງເດັກ ໃນການຈຳແນກຄວາມຖືກ-ຄວາມຜິດ;

4. ໃຫ້ເດັກໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ຈາກທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຫຼື ໃຫ້ມີພໍ່, ແມ່ ຫຼື ຜູ້ປົກຄອງ ເຂົ້າຮ່ວມນຳ;

5. ປະຕິບັດລະບຽບການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ໃນໄລຍະເວລາຂອງການດຳເນີນຄະດີເດັກ ເຖິງວ່າເດັກນັ້ນຈະມີຄວາມສາມາດທາງດ້ານການປະພຶດ ຫຼື ຮອດກະສຽນອາຍຸ ສິບແປດປີ ແລ້ວກໍຕາມ ໃຫ້ສານເດັກນັ້ນສືບຕໍ່ພິຈາລະນາຈົນກວ່າຄະດີສຳເລັດ. ຖ້າຫາກມີການຂໍອຸທອນ ແລະ ຂໍລົບລ້າງ ກໍໃຫ້ຄະນະສານເດັກຂອງສານຂັ້ນເທິງພິຈາລະນາຕໍ່ໄປ.

**ມາດຕາ 84 ການໄຕ່ສວນຄະດີເດັກໃນທີ່ປະຊຸມສານ**

**ການໄຕ່ສວນຄະດີເດັກໃນທີ່ປະຊຸມສານ ຕ້ອງປະຕິບັດ ດັ່ງນີ້:**

1. ດຳເນີນຢ່າງປິດລັບ ແລະ ໃຫ້ເດັກນັ່ງໃກ້ພໍ່, ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ;

2. ໃຊ້ ຄຳສັບ, ຄຳເວົ້າທີ່ເຂົ້າໃຈງ່າຍ, ມີລັກສະນະເປັນມິດກັບເດັກ ໂດຍບໍ່ໃຫ້ເດັກເກີດຄວາມຢ້ານກົວ, ຫຼີກເວັ້ນ ການຕັ້ງຄຳຖາມແບບກົດດັນ, ແບບຊີ້ນຳ ຫຼື ຄຳຖາມປິດ ຫຼື ຄຳຖາມຊັກຈູງ;

3. ດຳເນີນໂດຍຊ້ອງໜ້າບຸກຄົນທີ່ກ່ຽວຂ້ອງໂດຍຖືເອົາສິດ ຜົນປະໂຫຍດອັນສູງສຸດຂອງເດັກເປັນຫຼັກ ແລະ ປະຕິບັດຕາມລະບຽບການຂອງການໄຕ່ສວນ.

ການໄຕ່ສວນ ເດັກຖືກເຄາະຮ້າຍ, ເດັກເປັນພະຍານ ຫຼື ເດັກພິການ ຕ້ອງຫຼີກເວັ້ນການປະເຊີນໜ້າກັບຈຳເລີຍ ດ້ວຍການໃຊ້ຜ້າກັ້ງ ຫຼື ສິ່ງກຳບັງ ຫຼື ໃຫ້ຈຳເລີຍອອກຈາກຫ້ອງປະຊຸມສານເສຍກ່ອນ ຫຼື ການສຳພາດຜ່ານວີດີໂອ ຖ້າມີເງື່ອນໄຂ.

## ໝວດທີ 2
## ການດຳເນີນຄະດີອາຍາຂອງສານເດັກ ແລະ ຄະນະສານເດັກ

**ມາດຕາ 85 ການຮັບເອົາຄະດີມາພິຈາລະນາ**

ສານຈະຮັບເອົາຄະດີ ມາພິຈາລະນາໄດ້ກໍຕໍ່ເມື່ອມີຄຳສັ່ງຟ້ອງຂຶ້ນສານ ຂອງຫົວໜ້າອົງການໄອຍະການປະຊາຊົນ.

**ມາດຕາ 86 ການຄົ້ນຄ້ວາຄະດີເດັກ**

ພາຍຫຼັງທີ່ສານໄດ້ຮັບສຳນວນຄະດີຈາກອົງການໄອຍະການປະຊາຊົນແລ້ວ ປະທານສານຈະມອບໃຫ້ຜູ້ພິພາກສາທີ່ກ່ຽວຂ້ອງ ເປັນຜູ້ຄົ້ນຄວ້າຄວາມຖືກຕ້ອງ ກ່ຽວກັບການດຳເນີນຄະດີຂອງໜ່ວຍງານສືບສວນ-ສອບສວນຄະດີເດັກ, ໜ່ວຍງານໄອຍະການເດັກ ແລະ ຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການປະຊາຊົນ ຈາກນັ້ນຈຶ່ງນຳເອົາຄະດີດັ່ງກ່າວຜ່ານໝູ່ຄະນະແລ້ວ ນຳສະເໜີປະທານສານ ເພື່ອພິຈາລະນາຕົກລົງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການປະຊາຊົນ ເພື່ອທຳການສືບສວນ-ສອບຖາມເພີ່ມເຕີມ ຖ້າເຫັນວ່າການສອບຖາມ ຫຼື ການສືບສວນ-ສອບຖາມ ຫາກຍັງບໍ່ທັນຄົບຖ້ວນ;

2. ສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງເພີ່ມເຕີມ ຖ້າເຫັນວ່າຍັງມີການກະທຳຜິດອື່ນ ຫຼື ບຸກຄົນອື່ນ ທີ່ບໍ່ທັນໄດ້ຖືກສັ່ງຟ້ອງຂຶ້ນສານ;

3. ຕົກລົງ ວັນ, ເວລາ ນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ.

ກ່ອນການນຳເອົາຄະດີອອກພິຈາລະນາຕັດສິນ ຫຼື ພິພາກສາໃນທີ່ປະຊຸມສານນັ້ນ ຕ້ອງໃຫ້ມີຄຳຕົກລົງຂອງປະທານສານເດັກ ຫຼື ຫົວໜ້າຄະນະສານເດັກທີ່ກ່ຽວຂ້ອງ.

**ມາດຕາ 87 ການພິຈາລະນາຄະດີ**

ໃນການພິຈາລະນາຄະດີອາຍາກ່ຽວກັບເດັກ ຜູ້ພິພາກສາຕ້ອງອີງໃສ່ຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການປະຊາຊົນ ບົນພື້ນຖານຂໍ້ມູນ, ຫຼັກຖານ ແລະ ກົດໝາຍ.

ໃນການພິຈາລະນາຄຳໃຫ້ການຂອງເດັກ ສານຕ້ອງໃຊ້ດູນພິນິດວ່າ ເດັກສາມາດເຂົ້າໃຈ ແລະ ຮູ້ໄດ້ເຖິງຄວາມຖືກ-ຄວາມຜິດ ກ່ຽວກັບຄຳໃຫ້ການຂອງຕົນ ພ້ອມກັນນັ້ນ ສານກໍຕ້ອງຊອກຫາສາເຫດ ຂອງການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ ຫຼື ສາເຫດອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 88 ກຳນົດເວລາໃນການດຳເນີນຄະດີອາຍາເດັກ**

ສານເດັກ ແລະ ຄະນະສານເດັກ ຕ້ອງນຳເອົາຄະດີອອກມາພິຈາລະນາຕັດສິນ ຫຼື ພິພາກສາພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີມີການສັ່ງຟ້ອງຂຶ້ນສານໂດຍກົງ ໃຫ້ສານເດັກພິຈາລະນາຕັດສິນພາຍໃນສີ່ສິບແປດຊົ່ວໂມງ.

**ມາດຕາ 89 ການວາງໂທດທາງອາຍາຕໍ່ເດັກ**

ໃນການວາງໂທດນັ້ນ ສານຕ້ອງອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງເດັກ, ຜົນສະທ້ອນ, ສະພາບແວດລ້ອມ, ສາເຫດຈູງໃຈ ແລະ ສາເຫດທີ່ພາໃຫ້ມີການຫລຸດຜ່ອນ ຫຼື ສາເຫດອື່ນທີ່ມີຄວາມສຳຄັນ ສຳລັບຄະດີ.

ສານ ອາດຈະວາງໂທດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ ຫຼື ອາດຈະນຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງກົດໝາຍສະບັບນີ້.

ການວາງໂທດຕັດອິດສະລະພາບໃສ່ເດັກກະທຳຜິດ ໃຫ້ເປັນມາດຕະການສຸດທ້າຍ.

ຫ້າມລົງໂທດປະຫານຊີວິດ ແລະ ໂທດຕັດອິດສະລະພາບຕະຫຼອດຊີວິດ ໃສ່ເດັກກະທຳຜິດ.

ໃນກໍລະນີທີ່ມີຄວາມຈຳເປັນ ຕ້ອງໄດ້ລົງໂທດຕັດອິດສະລະພາບໃສ່ເດັກນັ້ນ ສານອາດຈະວາງໂທດໃສ່ການກະທຳຜິດຂອງເດັກເຄິ່ງໜຶ່ງຂອງໂທດ ຫຼື ຕ່ຳກວ່າໂທດທີ່ກົດໝາຍໄດ້ກຳນົດໄວ້ ກໍໄດ້.

ສຳລັບ ການກະທຳຜິດຂອງເດັກທີ່ມີໂທດປະຫານຊີວິດ ໃຫ້ຫຼຸດຜ່ອນໂທດມາເປັນໂທດຕັດອິດສະລະພາບ ຊາວປີ ຫຼື ໂທດຕັດອິດສະລະພາບຕະຫຼອດຊີວິດນັ້ນ ໃຫ້ຫຼຸດຜ່ອນມາເປັນໂທດຕັດອິດສະລະພາບ ສິບປີ ພ້ອມທັງໂທດປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

### ມາດຕາ 90 ການຂໍອຸທອນ ຫຼື ການສະເໜີຄັດຄ້ານ

ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານ ຄໍາສັ່ງ, ຄໍາຊີ້ຂາດ ຫຼື ຄໍາຕັດສິນຂອງສານເດັກ ຕາມກໍານົດເວລາທີ່ໄດ້ບົ່ງໄວ້ໃນກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

ສໍາລັບຄະດີທີ່ສັ່ງຟ້ອງຂຶ້ນສານໂດຍກົງ ຄູ່ຄວາມ ມີສິດຂໍອຸທອນ ແຕ່ບໍ່ມີສິດຂໍລົບລ້າງ, ສ່ວນຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານໄດ້.

ການດໍາເນີນຄະດີອາຍາ ກ່ຽວກັບເດັກຢູ່ສານຂັ້ນອຸທອນ ໃຫ້ປະຕິບັດຕາມ ພາກທີ IX ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

### ມາດຕາ 91 ການຂໍລົບລ້າງ ແລະ ຂໍຮື້ຟື້ນຄະດີອາຍາກ່ຽວກັບເດັກ

ຄູ່ຄວາມ ມີສິດຂໍລົບລ້າງ ແລະ ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາພິພາກສາຂັ້ນອຸທອນ ຕາມກໍານົດເວລາທີ່ໄດ້ບົ່ງໄວ້ໃນກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

ການດໍາເນີນຄະດີອາຍາ ກ່ຽວກັບເດັກຢູ່ສານຂັ້ນລົບລ້າງ ໃຫ້ປະຕິບັດຕາມ ພາກທີ X ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

ການຮື້ຟື້ນຄະດີອາຍາ ກ່ຽວກັບເດັກ ໃຫ້ປະຕິບັດຕາມ ພາກທີ XII ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ.

## ໝວດທີ 3
## ການດໍາເນີນຄະດີແພ່ງຂອງສານເດັກ ຫຼື ຄະນະສານເດັກ

### ມາດຕາ 92 ຄໍາຮ້ອງຟ້ອງ ຫຼື ຄໍາຮ້ອງຂໍທາງແພ່ງກ່ຽວກັບເດັກ

ສານເດັກ ຫຼື ຄະນະສານເດັກ ຈະຮັບເອົາຄໍາຮ້ອງຟ້ອງ ຫຼື ຄໍາຮ້ອງຂໍທາງແພ່ງກ່ຽວກັບ ເດັກມາພິຈາລະນາໃນກໍລະນີ ດັ່ງນີ້:

1. **ຄໍາຮ້ອງຟ້ອງກ່ຽວກັບ:**
   - ການໃຊ້ແທນຄ່າເສັຍຫາຍ ເນື່ອງຈາກການກະທໍາຜິດຂອງເດັກ;
   - ແຮງງານເດັກ;
   - ການກະທໍາລະຫວ່າງເດັກດ້ວຍກັນ;
   - ການລະເມີດສິດທິຂອງເດັກ;
   - ຄະດີອື່ນກ່ຽວກັບເດັກ.
2. **ຄໍາຮ້ອງຂໍກ່ຽວກັບ:**
   - ການແຕ່ງຕັ້ງຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງເດັກ;

- ການອອກມາດຕະການສຶກສາອົບຮົມເດັກ;
- ການແຕ່ງຕັ້ງຜູ້ຄຸ້ມຄອງຊັບສົມບັດຂອງເດັກ;
- ການນຳໃຊ້ມາດຕະການ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
- ການໃຫ້ປະຕິບັດຜົນການໄກ່ເກ່ຍ;
- ການຮ້ອງຂໍອື່ນກ່ຽວກັບເດັກ.

ນອກຈາກຄຳຮ້ອງຂໍທີ່ກ່າວມາຂ້າງເທິງນີ້ແລ້ວ ຍັງມີຄຳຮ້ອງຂໍທີ່ໄດ້ກຳນົດໄວ້ໃນມາດຕາ 330 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ.

### ມາດຕາ 93 ການດຳເນີນຄະດີແພ່ງກ່ຽວກັບເດັກ

ການດຳເນີນຄະດີແພ່ງກ່ຽວກັບເດັກ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຍົກເວັ້ນ ການສອບຖາມ, ການສຳພາດ, ການໄຕ່ສວນໃນທີ່ປະຊຸມສານ ແລະ ກຳນົດເວລາໃນການດຳເນີນຄະດີ ຊຶ່ງຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51, 52, 53, 54 ແລະ 88 ຂອງກົດໝາຍສະບັບນີ້.

### ມາດຕາ 94 ກຳນົດເວລາໃນການດຳເນີນຄະດີແພ່ງກ່ຽວກັບເດັກ

ສານເດັກ ຫຼື ຄະນະສານເດັກ ຕ້ອງນຳເອົາຄະດີອອກມາພິຈາລະນາຕັດສິນ ຫຼື ພິພາກສາພາຍໃນກຳນົດເວລາ ດັ່ງນີ້:

- ຂັ້ນຕົ້ນ ຫົກເດືອນ;
- ຂັ້ນອຸທອນ ສີ່ເດືອນ;
- ຂັ້ນລົບລ້າງ ສາມເດືອນ.

ໃນກໍລະນີທີ່ບໍ່ສາມາດພິຈາລະນາຕັດສິນ ຫຼື ພິພາກສາ ໃຫ້ສຳເລັດຕາມກຳນົດເວລານັ້ນ ຜູ້ພິພາກສາ ທີ່ຮັບຜິດຊອບຄະດີດັ່ງກ່າວ ຕ້ອງສະເໜີຕໍ່ປະທານສານທີ່ກ່ຽວຂ້ອງ ເພື່ອພິຈາລະນາອອກຄຳສັ່ງຕໍ່ກຳນົດເວລາຄົ້ນຄວ້າ ແລະ ຕັດສິນ ຫຼື ພິພາກສາ ແຕ່ການຕໍ່ເວລານັ້ນບໍ່ໃຫ້ກາຍ ສາມເດືອນ ຍົກເວັ້ນຄະດີທີ່ມີຄວາມຫຍຸ້ງຍາກສັບສົນຕາມການຕົກລົງຂອງຄະນະປະທານຂອງສານ.

ການໂຈະ ແລະ ການເລື່ອນ ການດຳເນີນຄະດີ ບໍ່ໃຫ້ນັບເຂົ້າໃນເວລາຂອງການຄົ້ນຄວ້າ ແລະ ການຕັດສິນ ຫຼື ພິພາກສາຄະດີ.

### ມາດຕາ 95 ການຂໍອຸທອນ ຫຼື ການສະເໜີຄັດຄ້ານ

ຄູ່ຄວາມ, ບຸກຄົນທີສາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນຂອງສານເດັກ ຕາມກຳນົດເວລາ ທີ່ໄດ້ບົ່ງໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ.

ສໍາລັບການຂໍອຸທອນ ຄໍາສັ່ງ ຫຼື ຄໍາຊີ້ຂາດ ຂອງສານ ໃຫ້ປະຕິບັດ ພາຍໃນກໍານົດເວລາ ເຈັດວັນ ນັບແຕ່ວັນອອກຄໍາສັ່ງ ຫຼື ຄໍາຊີ້ຂາດ ຫຼື ວັນຮັບຊາບເປັນຕົ້ນໄປ.

ການດໍາເນີນຄະດີແພ່ງ ກ່ຽວກັບເດັກຢູ່ສານຂັ້ນອຸທອນ ໃຫ້ປະຕິບັດຕາມ ພາກທີ XII ຂອງ ກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ.

**ມາດຕາ 96 ຄະດີແພ່ງກ່ຽວກັບເດັກທີ່ບໍ່ອະນຸຍາດໃຫ້ຂໍອຸທອນ**

ຄະດີແພ່ງກ່ຽວກັບເດັກທີ່ບໍ່ອະນຸຍາດໃຫ້ຂໍອຸທອນ ມີ ດັ່ງນີ້:

1. ຄະດີທີ່ສານເດັກໄດ້ອອກຄໍາຊີ້ຂາດ ຢັ້ງຢືນ ຫຼື ບໍ່ຢັ້ງຢືນເອົາຕາມການຕົກລົງຂອງການໄກ່ເກ່ຍ;
2. ຄໍາຕັດສິນ ໃຫ້ປະຕິບັດພາງ.

**ມາດຕາ 97 ການ ຂໍລົບລ້າງ ແລະ ຮື້ຟື້ນຄະດີແພ່ງກ່ຽວກັບເດັກ**

ຄູ່ຄວາມ ມີສິດຂໍລົບລ້າງ ແລະ ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄໍາພິພາກສາຂັ້ນອຸທອນໄດ້ພາຍໃນກໍານົດ ສາມສິບວັນ ນັບແຕ່ວັນລົງຄໍາພິພາກສາ ຫຼື ວັນຮັບຊາບຄໍາພິພາກສາດັ່ງກ່າວເປັນຕົ້ນໄປ.

ສໍາລັບການຂໍລົບລ້າງ ຄໍາສັ່ງ ແລະ ຄໍາຊີ້ຂາດຂອງຄະນະສານເດັກ ໃຫ້ປະຕິບັດພາຍໃນກໍານົດ ເວລາ ເຈັດວັນ ນັບແຕ່ວັນອອກຄໍາສັ່ງ ຫຼື ຄໍາຊີ້ຂາດ ຫຼື ວັນຮັບຊາບເປັນຕົ້ນໄປ.

ການຮື້ຟື້ນຄະດີແພ່ງກ່ຽວກັບເດັກ ໃຫ້ປະຕິບັດຕາມພາກທີ XV ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ.

## ພາກທີ VIII
## ການຕິດຕາມ, ການຝຶກອົບຮົມ ແລະ ການປິ່ນປົວເດັກ
### ໝວດທີ 1
### ການຕິດຕາມເດັກ

**ມາດຕາ 98 ຄວາມຮັບຜິດຊອບຂອງຄອບຄົວ ແລະ ການຈັດຕັ້ງ**

ພໍ່, ແມ່, ຜູ້ປົກຄອງ, ອົງການປົກຄອງບ້ານ, ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ, ໂຮງຮຽນ, ຕາໜ່າງປົກປ້ອງ ແລະ ຊ່ວຍເຫຼືອເດັກ, ຫ້ອງການຍຸຕິທໍາເມືອງ, ເທດສະບານ ແລະ ໜ່ວຍງານອື່ນຂອງລັດທຸກຂັ້ນ ມີຄວາມຮັບຜິດຊອບໃນການຕິດຕາມ, ຊ່ວຍເຫຼືອ, ປະສານສົມທົບ ຊຶ່ງກັນ ແລະ ກັນ ເພື່ອສຶກສາອົບຮົມເດັກກະທໍາຜິດ ຫຼື ເຄີຍໄດ້ກະທໍາຜິດ ໃຫ້ກາຍເປັນຄົນດີໃນສັງຄົມ. ສ້າງເງື່ອນໄຂໃຫ້ເດັກໄດ້ຮັບການສຶກສາຂັ້ນພື້ນຖານ, ຝຶກວິຊາຊີບໃດໜຶ່ງຕາມຄວາມເໝາະສົມ ແລະ ໄດ້ຮັບການເບິ່ງແຍງດູແລດ້ານສຸຂະພາບ.

**ມາດຕາ 99 ການຕິດຕາມການປະພຶດຂອງເດັກກະທຳຜິດ**

ພໍ່, ແມ່, ຜູ້ປົກຄອງ ຫຼື ການຈັດຕັ້ງ ທີ່ໄດ້ຮັບມອບໝາຍຕາມບົດບັນທຶກການໄກ່ເກ່ຍ ຫຼື ຄຳຕັດສິນຂອງສານໃຫ້ຕິດຕາມການປະພຶດຂອງເດັກກະທຳຜິດ ຕ້ອງປະຕິບັດ ດັ່ງນີ້:

1. ບັນທຶກປະຫວັດສ່ວນຕົວຂອງເດັກ;
2. ບັນທຶກການລາຍງານຕົວຂອງເດັກ, ການປະຕິບັດມາດຕະການທີ່ວາງໃສ່ເດັກ;
3. ສຶກສາອົບຮົມ, ແນະນຳ, ຕັກເຕືອນ ໃຫ້ເດັກເຄົາລົບ ແລະ ປະຕິບັດລະບຽບກົດໝາຍ;
4. ບັນທຶກການປ່ຽນແປງພຶດຕິກຳ, ຄວາມຮູ້ສຶກ ແລະ ການຂໍຄວາມຊ່ວຍເຫຼືອຂອງເດັກ;
5. ລາຍງານຜົນຂອງການຕິດຕາມເດັກ ໃຫ້ອົງການປົກຄອງບ້ານ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງເປັນປົກກະຕິ.

## ໝວດທີ 2
## ການຝຶກອົບຮົມເດັກກະທຳຜິດ

**ມາດຕາ 100 ການຝຶກອົບຮົມເດັກກະທຳຜິດ**

ການຝຶກອົບຮົມເດັກກະທຳຜິດ ແມ່ນ ການນຳໃຊ້ມາດຕະການຕໍ່ເດັກ ດ້ວຍວິທີການສຶກສາອົບຮົມ ແນວຄິດ ແລະ ການກະທຳ ລວມທັງການຝຶກວິຊາຊີບ ໂດຍຜ່ານສູນຝຶກອົບຮົມສຳລັບເດັກກະທຳຜິດ.

ເດັກກະທຳຜິດ ຫຼື ເດັກທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບ ຈະຖືກສົ່ງເຂົ້າສູນຝຶກອົບຮົມ ສຳລັບເດັກກະທຳຜິດ.

**ມາດຕາ 101 ສູນຝຶກອົບຮົມສຳລັບເດັກກະທຳຜິດ**

ສູນຝຶກອົບຮົມສຳລັບເດັກກະທຳຜິດ ແມ່ນ ສະຖານທີ່ດັດສ້າງເດັກກະທຳຜິດ ຕາມຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທັງແມ່ນສູນສຳລັບສຶກສາອົບຮົມແນວຄິດ ແລະ ການກະທຳຂອງເດັກ ລວມທັງການຝຶກວິຊາຊີບ ເພື່ອໃຫ້ເດັກກາຍເປັນຄົນດີຂອງສັງຄົມ.

ສູນຝຶກອົບຮົມສຳລັບເດັກກະທຳຜິດ ມີ ຢູ່ຂັ້ນແຂວງ ແລະ ສູນກາງ ຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງກະຊວງປ້ອງກັນຄວາມສະຫງົບ.

ງົບປະມານຮັບໃຊ້ການເຄື່ອນໄຫວ ຂອງສູນຝຶກອົບຮົມເດັກກະທຳຜິດ ໄດ້ມາຈາກງົບປະມານຂອງລັດ, ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 102 ສິດ ແລະ ໜ້າທີ່ຂອງສູນຝຶກອົບຮົມສຳລັບເດັກກະທຳຜິດ**

ສູນຝຶກອົບຮົມສຳລັບເດັກກະທຳຜິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມແນວຄິດ, ຄຸນສົມບັດ, ໃຫ້ການສຶກສາຮ່ຳຮຽນ, ຝຶກອົບຮົມວິຊາຊີບ ເພື່ອຊ່ວຍໃຫ້ເດັກເປັນຄົນດີ ແລະ ສາມາດກັບຄືນເຂົ້າສູ່ສັງຄົມ;

2. ມີການເຄື່ອນໄຫວ ດ້ານກິລາ ແລະ ສິນລະປະວັນນະຄະດີ ເພື່ອພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈຂອງເດັກ;

3. ຈັດຕັ້ງການອອກແຮງງານ ຕາມຄວາມເໝາະສົມ ກັບອາຍຸຂອງເດັກ;

4. ໃຫ້ຄຳປຶກສາ ແລະ ຮັບຟັງຄຳຄິດຄຳເຫັນຂອງເດັກ;

5. ພົວພັນ, ຮ່ວມມື ແລະ ປະສານສົມທົບກັບອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ;

6. ລາຍງານຜົນການປະພຶດຂອງເດັກ ໃຫ້ຂັ້ນເທິງຂອງຕົນ ແລະ ອົງການໄອຍະການປະຊາຊົນເປັນປົກກະຕິ;

7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນຝຶກອົບຮົມເດັກກະທຳຜິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 103 ສິດ ຂອງເດັກກະທຳຜິດ ໃນສູນຝຶກອົບຮົມ**

ເດັກກະທຳຜິດທີ່ຖືກສົ່ງເຂົ້າສູນຝຶກອົບຮົມ ມີ ສິດ ດັ່ງນີ້ :

1. ມີບ່ອນພັກເຊົາ ແລະ ໄດ້ຮັບອາຫານຢ່າງເໝາະສົມ;

2. ໄດ້ຮັບເຄື່ອງນຸ່ງຢ່າງເໝາະສົມ ແລະ ສອດຄ່ອງກັບສະພາບອາກາດ;

3. ໄດ້ຮັບການບໍລິການດ້ານສາທາລະນະສຸກ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ;

4. ໄດ້ຫຼິ້ນກິລາ, ສິນລະປະ ແລະ ພັກຜ່ອນຕາມລະບຽບການ;

5. ໄດ້ພົບພໍ່ແມ່, ຜູ້ປົກຄອງ, ຜູ້ປົກປ້ອງ, ຍາດພີ່ນ້ອງ ແລະ ໝູ່ເພື່ອນ;

6. ໄດ້ຮັບຂໍ້ມູນຂ່າວສານທີ່ເປັນປະໂຫຍດສຳລັບເດັກ;

7. ໄດ້ຮັບການປົກປ້ອງຈາກການທາລຸນທຸກຮູບແບບ, ການສວຍໃຊ້, ການປະລະ ແລະ ການລົງວິໄນທີ່ບໍ່ເໝາະສົມ;

8. ສະເໜີຄຳຄິດຄຳເຫັນ;

9. ມີສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 104 ຄວາມຮັບຜິດຊອບຂອງເດັກໃນສູນຝຶກອົບຮົມ**

ເດັກໃນສູນຝຶກອົບຮົມ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລະບຽບພາຍໃນຂອງສູນຝຶກອົບຮົມ;

2. ຝຶກຝົນຕົນເອງໃຫ້ກາຍເປັນເດັກທີ່ດີ;

3. ສຶກສາຮໍ່າຮຽນ, ອອກແຮງງານ ແລະ ຝຶກວິຊາຊີບ;

4. ເຄົາລົບ, ນັບຖືສິດຂອງບຸກຄົນອື່ນ ແລະ ໃຫ້ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ລະບຽບພາຍໃນຂອງສູນຝຶກອົບຮົມ.

## ມາດຕາ 105 ການໂຍກຍ້າຍເດັກກະທຳຜິດ

ການໂຍກຍ້າຍເດັກກະທຳຜິດຈາກສູນຝຶກອົບຮົມສຳລັບເດັກກະທຳຜິດໃດໜຶ່ງ ໄປຢູ່ສູນຝຶກອົບຮົມອື່ນ ຕ້ອງມີຄຳຮ້ອງຂໍເປັນລາຍລັກອັກສອນຂອງ ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ ໂດຍຜ່ານຄະນະຮັບຜິດຊອບສູນ ເພື່ອພິຈາລະນາພາຍໃນກຳນົດເວລາ ຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ ແລ້ວສະເໜີຕໍ່ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ ບ່ອນສູນຕັ້ງຢູ່ພິຈາລະນາ ພາຍໃນກຳນົດ ເຈັດວັນ ນັບແຕ່ວັນໄດ້ຮັບ ຄຳສະເໜີເປັນຕົ້ນໄປ ແລ້ວ ຈຶ່ງລາຍງານຕໍ່ກະຊວງປ້ອງກັນຄວາມສະຫງົບ.

ເມື່ອກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ ໄດ້ຕົກລົງເຫັນດີໃຫ້ໂຍກຍ້າຍເດັກກະທຳຜິດແລ້ວ ສູນ ຝຶກອົບຮົມທີ່ກ່ຽວຂ້ອງ ຕ້ອງໄດ້ເຮັດບົດບັນທຶກກ່ຽວກັບຊີວະປະຫວັດ, ສຸຂະພາບ, ການຝຶກອົບຮົມ ແລະ ບັນຫາອື່ນ ແລ້ວສົ່ງໃຫ້ສູນຝຶກອົບຮົມ ບ່ອນຈະຮັບເອົາເດັກກະທຳຜິດ. ສຳລັບວັດຖຸສິ່ງຂອງ ສ່ວນຕົວ ຕ້ອງມອບໃຫ້ຜູ້ກ່ຽວ.

ຖ້າວ່າເດັກຢູ່ສູນຝຶກອົບຮົມເດັກກະທຳຜິດຫາກບັນລຸນິຕິພາວະແລ້ວ ແຕ່ຜູ້ກ່ຽວຍັງຕ້ອງໄດ້ສືບຕໍ່ປະຕິບັດໂທດຢ່າງໜ້ອຍ ສາມປີ ໃຫ້ໂຍກຍ້າຍໄປປະຕິບັດໂທດຢູ່ຄ້າຍດັດສ້າງສຳລັບນັກໂທດທົ່ວໄປ.

ໃນການໂຍກຍ້າຍເດັກກະທຳຜິດ ຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນບ່ອນສູນຝຶກອົບຮົມຕັ້ງຢູ່ ເພື່ອຕິດຕາມກວດກາ.

ຄ່າໃຊ້ຈ່າຍໃນການໂຍກຍ້າຍເດັກກະທຳຜິດ ຕາມການຮ້ອງຂໍນັ້ນ ໃຫ້ຜູ້ຮ້ອງຂໍເປັນຜູ້ຮັບຜິດຊອບ. ສ່ວນການໂຍກຍ້າຍໂດຍໜ້າທີ່ນັ້ນ ໃຫ້ລັດເປັນຜູ້ຮັບຜິດຊອບ.

## ມາດຕາ 106 ການປ່ອຍຕົວເດັກກ່ອນກຳນົດໂດຍມີເງື່ອນໄຂ

ການປ່ອຍຕົວເດັກກ່ອນກຳນົດໂດຍມີເງື່ອນໄຂ ສາມາດປະຕິບັດໄດ້ໃນກໍລະນີ ດັ່ງນີ້:

1. ເດັກ ມີຄວາມກ້າວໜ້າ, ໄດ້ຝຶກຝົນຫຼໍ່ຫຼອມຕົນເອງ, ເປັນແບບຢ່າງທີ່ດີ ໃນການອອກແຮງງານ ແລະ ການປະຕິບັດລະບຽບພາຍໃນຂອງສູນຝຶກອົບຮົມ;

2. ເດັກ ໄດ້ມີການປ່ຽນແປງທາງດ້ານທັດສະນະແນວຄິດ ແລະ ມີຄວາມຮູ້ສຶກກິນແໜງຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນໃນໄລຍະຜ່ານມາ;

3. ເດັກໄດ້ປະຕິບັດໂທດ ຕາມຄຳຕັດສິນຂອງສານ ຢ່າງໜ້ອຍເຄິ່ງໜຶ່ງ ເວັ້ນເສຍແຕ່ເດັກໄດ້ກະທຳຜິດໃນສະຖານ ບໍ່ເຂັດຫຼາບ ແລະ ເປັນອາຈີນ.

ໃນການປ່ອຍຕົວເດັກກ່ອນກຳນົດຕາມກໍລະນີເທິງນີ້ ສູນຝຶກອົບຮົມທີ່ກ່ຽວຂ້ອງຕ້ອງສະເໜີຜ່ານກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ບ່ອນສູນຕັ້ງຢູ່ ພິຈາລະນາ ແລ້ວສະເໜີຕໍ່ຫົວໜ້າອົງການໄອຍະການປະຊາຊົນ ຖະແຫຼງໃຫ້ສານພິຈາລະນາຕັດສິນ.

## ໝວດທີ 3
## ການປິ່ນປົວເດັກກະທຳຜິດ

### ມາດຕາ 107 ການປິ່ນປົວເດັກກະທຳຜິດ

ໃນທຸກຂັ້ນຕອນຂອງການດຳເນີນຄະດີ ຖ້າຫາກເດັກຖືກກັກຂັງ ຫຼື ເດັກຢູ່ໃນສູນຝຶກອົບຮົມສຳລັບເດັກ ມີອາການເຈັບປ່ວຍ ຕ້ອງແຈ້ງໃຫ້ ພໍ່ແມ່, ຜູ້ປົກຄອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຕ້ອງທຳການປິ່ນປົວຢ່າງຮີບດ່ວນ. ໃນກໍລະນີແພດປະຈຳສະຖານທີ່ກັກຂັງ ຫຼື ສູນຝຶກອົບຮົມສຳລັບເດັກ ບໍ່ສາມາດປິ່ນປົວໄດ້ ກໍຕ້ອງສົ່ງເດັກໄປປິ່ນປົວຢູ່ໂຮງໝໍ ຫຼື ສະຖານທີ່ປິ່ນປົວສະເພາະ.

### ມາດຕາ 108 ການອະນຸຍາດສົ່ງເດັກໄປປິ່ນປົວ

ໃນເວລາດຳເນີນຄະດີ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານເດັກ, ຫົວໜ້າຄະນະສານເດັກ ມີສິດອະນຸຍາດໃຫ້ເດັກທີ່ເຈັບປ່ວຍນັ້ນໄປປິ່ນປົວຕາມການສະເໜີຂອງ ຫົວໜ້າສະຖານທີ່ກັກຂັງເດັກ ຫຼື ຫົວໜ້າສູນຝຶກອົບຮົມສຳລັບເດັກກະທຳຜິດ.

ໃນກໍລະນີເດັກກະທຳຜິດ ຫາກໄດ້ເຈັບເປັນຢ່າງກະທັນຫັນ ຫົວໜ້າສະຖານທີ່ກັກຂັງເດັກ ຫຼື ຫົວໜ້າສູນຝຶກອົບຮົມສຳລັບເດັກກະທຳຜິດ ສາມາດອະນຸຍາດໃຫ້ນຳເດັກໄປປິ່ນປົວ ແຕ່ຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນ ຫຼື ປະທານສານເດັກ ຫຼື ຫົວໜ້າຄະນະສານເດັກພາຍໃນກຳນົດ ຊາວສີ່ຊົ່ວໂມງ ເພື່ອຕິດຕາມກວດກາ.

ພາຍຫຼັງປິ່ນປົວດີແລ້ວ ໃຫ້ນຳເດັກມາດຳເນີນຄະດີ ຫຼື ສືບຕໍ່ຝຶກອົບຮົມ.

ກຳນົດເວລາຂອງການປິ່ນປົວ ໃຫ້ນັບເຂົ້າໃນກຳນົດເວລາຂອງການກັກຂັງ ຫຼື ການຝຶກອົບຮົມ.

### ມາດຕາ 109 ການຄຸ້ມຄອງ ແລະ ປ້ອງກັນ ເດັກທີ່ຖືກສົ່ງໄປປິ່ນປົວ

ເດັກກະທຳຜິດ ທີ່ຖືກກັກຂັງ ຫຼື ຢູ່ໃນສູນຝຶກອົບຮົມສຳລັບເດັກກະທຳຜິດ ຫາກເຈັບເປັນ ຕ້ອງຖືກສົ່ງໄປປິ່ນປົວຢູ່ໂຮງໝໍ ຫຼື ສະຖານທີ່ປິ່ນປົວສະເພາະຂອງລັດເທົ່ານັ້ນ.

ການຄຸ້ມຄອງ ແລະ ປ້ອງກັນ ເດັກທີ່ຖືກສົ່ງໄປປິ່ນປົວ ຕ້ອງຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງເຈົ້າໜ້າທີ່ຕຳຫຼວດປະຈຳສະຖານທີ່ກັກຂັງ ຫຼື ສູນຝຶກອົບຮົມສຳລັບເດັກກະທຳຜິດ.

### ມາດຕາ 110 ການເສຍຊີວິດຂອງເດັກກະທຳຜິດ

ໃນກໍລະນີເດັກກະທຳຜິດ ທີ່ກຳລັງຖືກດຳເນີນຄະດີ ແລະ ຖືກກັກຂັງ ຫຼື ກຳລັງຝຶກອົບຮົມ ຫາກໄດ້ເສຍຊີວິດ ຕ້ອງແຈ້ງໃຫ້ພໍ່ແມ່, ຜູ້ປົກຄອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ, ຖ້າເດັກຫາກເປັນ ຄົນຕ່າງປະເທດ ກໍໃຫ້ແຈ້ງຕໍ່ສະຖານກົງສູນ ຫຼື ສະຖານທູດທີ່ກ່ຽວຂ້ອງໃນທັນໃດ.

ໃນການເສຍຊີວິດຂອງເດັກ ຕ້ອງໄດ້ທຳການພິສູດຫາສາເຫດທີ່ພາໃຫ້ເດັກເສຍຊີວິດ. ໃນກໍລະນີຍັງມີການສົງໄສ ພໍ່ແມ່, ຜູ້ປົກຄອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດສະເໜີໃຫ້ພິສູດຄືນ ໃໝ່ກໍໄດ້.

## ພາກທີ IX
## ການຮ່ວມມືສາກົນກ່ຽວກັບການດຳເນີນຄະດີເດັກ

### ມາດຕາ 111 ການຮ່ວມມືສາກົນ ກ່ຽວກັບການດຳເນີນຄະດີເດັກ

ການຮ່ວມມືສາກົນກ່ຽວກັບການດຳເນີນຄະດີເດັກ ໃຫ້ປະຕິບັດບົນຫຼັກການເຄົາລົບຄວາມ ເປັນເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ ບົນພື້ນຖານສັນຍາສາກົນ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສອດຄ່ອງກັບກົດໝາຍຂອງ ສປປ ລາວ.

ໃນກໍລະນີ ທີ່ ສປປ ລາວ ບໍ່ທັນໄດ້ເຊັນສັນຍາສາກົນ ຫຼື ບໍ່ທັນໄດ້ເຂົ້າຮ່ວມເປັນພາຄີໃນ ສົນທິສັນຍາ ໃຫ້ດຳເນີນຕາມຫຼັກການຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແຕ່ບໍ່ໃຫ້ຂັດກັບລັດຖະທຳ ມະນູນ ແລະ ກົດໝາຍຂອງ ສປປ ລາວ.

### ມາດຕາ 112 ການຊ່ວຍເຫຼືອທາງດ້ານຍຸຕິທຳເດັກ

ໃນການຊ່ວຍເຫຼືອທາງດ້ານຍຸຕິທຳເດັກ ອົງການທີ່ມີສິດອຳນາດໃນການດຳເນີນຄະດີເດັກ ຂອງ ສປປ ລາວ ຕ້ອງປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ຕ້ອງໃຫ້ສອດ ຄ່ອງກັບກົດໝາຍຂອງ ສປປ ລາວ.

ການຊ່ວຍເຫຼືອທາງດ້ານຍຸຕິທຳເດັກ ແມ່ນໃສ່ການສົ່ງຜູ້ຮ້າຍຂ້າມແດນ, ການໂອນຕົວເດັກ ກະທຳຜິດ, ການຍຶດ ຫຼື ການອາຍັດຊັບຂອງ ຜູ້ຖືກຫາ ຫຼື ຈຳເລີຍ, ການສະໜອງຂໍ້ມູນຂ່າວສານ

ກ່ຽວກັບເດັກກະທຳຜິດ ແລະ ວັດຖຸສິ່ງຂອງທີ່ພົວພັນກັບຄະດີ, ການປະຕິບັດຄຳຕັດສິນຂອງສານ ແລະ ການຮ່ວມມືຕ້ານອາຊະຍາກຳອື່ນກ່ຽວກັບເດັກ.

### ມາດຕາ 113 ການປະຕິເສດການຊ່ວຍເຫຼືອທາງດ້ານຍຸຕິທຳເດັກ

ອົງການທີ່ມີສິດອຳນາດ ໃນການດຳເນີນຄະດີອາຍາ ກ່ຽວກັບເດັກ ຂອງ ສປປ ລາວ ອາດຈະປະຕິເສດການຊ່ວຍເຫຼືອທາງດ້ານຍຸຕິທຳເດັກ ໃນກໍລະນີ ດັ່ງນີ້:

1. ການສະເໜີຂໍການຊ່ວຍເຫຼືອທາງດ້ານຍຸຕິທຳ ບໍ່ສອດຄ່ອງກັບສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ກົດໝາຍຂອງ ສປປ ລາວ;

2. ການປະຕິບັດການຊ່ວຍເຫຼືອທາງດ້ານຍຸຕິທຳ ຈະເປັນຜົນກະທົບ ຕໍ່ອະທິປະໄຕ, ຄວາມສະຫງົບ, ຄວາມໝັ້ນຄົງຂອງຊາດ ຫຼື ຜົນປະໂຫຍດອັນສຳຄັນຂອງ ສປປ ລາວ.

### ມາດຕາ 114 ການຮັບຮູ້ຄຳຕັດສິນທາງແພ່ງຂອງສານຕ່າງປະເທດ

ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນທາງແພ່ງກ່ຽວກັບເດັກຂອງສານຕ່າງປະເທດ ໂດຍຜ່ານສະຖານທູດ, ກົງສູນ ຫຼື ອົງການຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ແລະ ໄດ້ແປເປັນພາສາລາວແລ້ວ.

ການຮ້ອງຂໍ, ການພິຈາລະນາໃຫ້ຮັບຮູ້ ຄຳຕັດສິນທາງແພ່ງຂອງສານຕ່າງປະເທດ ແລະ ການດຳເນີນຄະດີ ລະຫວ່າງປະເທດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

## ພາກທີ X
## ການຄຸ້ມຄອງ ແລະ ກວດກາວຽກງານຄະດີເດັກ

### ມາດຕາ 115 ອົງການຄຸ້ມຄອງ

ອົງການຄຸ້ມຄອງວຽກງານຄະດີເດັກ ປະກອບດ້ວຍ ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ.

ກະຊວງຍຸຕິທຳ ຄຸ້ມຄອງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ແລະ ຫ້ອງການຍຸຕິທຳເມືອງ, ເທດສະບານ ໃນການແກ້ໄຂຄະດີເດັກ;

ກະຊວງປ້ອງກັນຄວາມສະຫງົບ ຄຸ້ມຄອງໜ່ວຍງານສືບສວນ-ສອບສວນຄະດີເດັກ, ສະຖານທີ່ກັກຂັງ ແລະ ສູນຝຶກອົບຮົມສຳລັບເດັກກະທຳຜິດ;

ອົງການໄອຍະການປະຊາຊົນສູງສຸດ ຄຸ້ມຄອງໜ່ວຍງານໄອຍະການເດັກ ໃນການດຳເນີນຄະດີເດັກ.

ສານປະຊາຊົນສູງສຸດ ຄຸ້ມຄອງສານເດັກ ຫຼື ຄະນະສານເດັກ ໃນວຽກງານດໍາເນີນຄະດີເດັກ.

**ມາດຕາ 116 ອົງການກວດກາວຽກງານຄະດີເດັກ**

ອົງການກວດກາວຽກງານຄະດີເດັກ ແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 115 ຂອງກົດໝາຍສະບັບນີ້. ແຕ່ລະອົງການມີໜ້າທີ່ກວດກາ ການປະຕິບັດວຽກງານຕາມຂະແໜງການຂອງຕົນ. ສໍາລັບອົງການໄອຍະການປະຊາຊົນສູງສຸດ ນອກຈາກການຕິດຕາມກວດກາຕາມສາຍຕັ້ງແລ້ວ ຍັງມີສິດ ແລະ ໜ້າທີ່ປະຕິບັດ ຕາມພາລະບົດບາດ ທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 117 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານຄະດີເດັກ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຄະດີເດັກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ວາງຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການດໍາເນີນຄະດີເດັກ;
2. ໂຄສະນາ, ເຜີຍແຜ່ ແຜນນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການດໍາເນີນຄະດີເດັກ;
3. ບໍາລຸງ, ສ້າງ, ຝຶກອົບຮົມ, ຍົກລະດັບ ພະນັກງານສະເພາະ ກ່ຽວກັບການດໍາເນີນຄະດີເດັກ;
4. ຊີ້ນໍາ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແຜນນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານຄະດີເດັກ;
5. ເກັບກໍາສະຖິຕິ ແລະ ຂໍ້ມູນກ່ຽວກັບຄະດີເດັກ ໃນຂອບເຂດທົ່ວປະເທດ;
6. ປະສານສົມທົບຊຶ່ງກັນ ແລະ ກັນ ຫຼື ກັບພາກສ່ວນອື່ນ ກ່ຽວກັບວຽກງານດໍາເນີນຄະດີເດັກ;
7. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານດໍາເນີນຄະດີເດັກ;
8. ສະຫຼຸບ, ລາຍງານວຽກງານຄະດີເດັກ ໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 118 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ອົງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 119 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້